ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 283 /ລບ

ນະຄອນຫຼວງວຽງຈັນ, ວັນທີ 03 / 09 / 26

# ດຳລັດ
# ວ່າດ້ວຍການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 24/ສພຊ, ລົງວັນ 12 ທັນວາ 2012;
- ອີງຕາມ ກົດໝາຍ ວ່າດ້ວຍການຂົນສົ່ງຫຼາຍຮູບແບບ ສະບັບເລກທີ 28/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ກົດໝາຍ ວ່າດ້ວຍການລົດໄຟ ສະບັບເລກທີ 62/ສພຊ, ລົງວັນທີ 17 ທັນວາ 2018;
- ອີງຕາມ ໜັງສືສະເໜີ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 1022/ຍທຂ, ລົງວັນທີ 12 ທັນວາ 2025.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ, ຕິດຕາມ ກວດກາ ການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມເຂັ້ມງວດ, ມີປະສິດທິພາບ, ປະສິດທິຜົນ ແລະ ທັນສະໄໝ ແນໃສ່ ເຮັດໃຫ້ການຂົນສົ່ງສິນຄ້າອັນຕະລາຍ ຢູ່ພາຍໃນປະເທດ ແລະ ຂ້າມແດນ ມີ ຄວາມສະດວກ, ປອດໄພ, ທັນເວລາ ແລະ ບໍ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ**

ການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ແມ່ນ ການຂົນສົ່ງສິນຄ້າ ໂດຍໃຊ້ຍານພາຫະນະຂົນສົ່ງສິນຄ້າ ທາງບົກ ແລະ ທາງລົດໄຟ ທີ່ເໝາະສົມກັບປະເພດ ແລະ ລະດັບຄວາມອັນຕະລາຍຂອງສິນຄ້າ ໂດຍສອດຄ່ອງກັບ ກົດໝາຍຂອງ ສປປ ລາວ ແລະ ລະບຽບການສາກົນ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບ ທີ່ນໍາໃຊ້ໃນດໍາລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິນຄ້າອັນຕະລາຍ** ໝາຍເຖິງ ສິນຄ້າ ທີ່ມີທາດກໍາມັນຕະພາບລັງສີ, ວັດຖຸນິວເຄຼຍ, ເຄມີ ແລະ ວັດຖຸສິ່ງຂອງອັນຕະລາຍ ທີ່ມີ ຫຼື ບໍ່ມີ ກິ່ນ, ອາຍ ທີ່ເປັນອັນຕະລາຍຕໍ່ສິ່ງແວດລ້ອມ ເປັນຕົ້ນ ສຸຂະພາບ, ຊີວິດຂອງຄົນ, ສັດ ແລະ ພືດ;

2. **ເຄມີອັນຕະລາຍ** ໝາຍເຖິງ ທາດ ຫຼື ວັດຖຸ ທີ່ຢູ່ໃນສະພາບແຂງ, ແຫຼວ ຫຼື ອາຍແກັສ ທີ່ມີຄວາມເປັນອັນຕະລາຍຕໍ່ສິ່ງແວດລ້ອມ ໃນເວລາ ຜະລິດ, ນໍາເຂົ້າ, ສົ່ງອອກ, ຫຸ້ມຫໍ່, ນໍາໃຊ້ ຫຼື ກໍາຈັດ ຂອງຜູ້ດໍາເນີນທຸລະກິດ ຫຼື ຜູ້ນໍາໃຊ້ ທີ່ມີແນວໂນ້ມຈະໄດ້ຮັບອັນຕະລາຍຈາກການສໍາຜັດກັບທາດ ຫຼື ວັດຖຸດັ່ງກ່າວ;

3. **ພາຊະນະບັນຈຸສິນຄ້າອັນຕະລາຍ** ໝາຍເຖິງ ຖັງ, ຖົງ, ຂວດ, ແກັດ ແລະ ສິ່ງອື່ນ ທີ່ນໍາໃຊ້ບັນຈຸສິນຄ້າອັນຕະລາຍ;

4. **ຫີບຫໍ່ສິນຄ້າອັນຕະລາຍ** ໝາຍເຖິງ ຜະລິດຕະພັນບັນຈຸສິນຄ້າອັນຕະລາຍ ທີ່ຕິດ ສະຫຼາກ ແລະ ເຄື່ອງໝາຍ ສິນຄ້າອັນຕະລາຍ ຕາມແຕ່ລະປະເພດ ແລະ ພ້ອມທີ່ຈະຂົນສົ່ງ;

5. **ການຫຸ້ມຫໍ່ສິນຄ້າອັນຕະລາຍ** ໝາຍເຖິງ ການນໍາໃຊ້ ແຜ່ນຢາງ, ເຈ້ຍ, ກະດາດ, ແຜ່ນໄມ້ອັດ ແລະ ວັດສະດຸອື່ນ ມາປົກຄຸມ ຫຼື ປົກຫຸ້ມສິນຄ້າອັນຕະລາຍ ເພື່ອປ້ອງກັນສິນຄ້າ ບໍ່ໃຫ້ມີຄວາມເສຍຫາຍຈາກອຸນຫະພູມ, ແສງ, ການກະທົບ, ການຮົ່ວໄຫຼ, ການປົນເປື້ອນ ແລະ ອື່ນໆ;

6. **ກຸ່ມບັນຈຸສິນຄ້າອັນຕະລາຍ** ໝາຍເຖິງ ກຸ່ມທີ່ກໍານົດລະດັບຄວາມເປັນອັນຕະລາຍຂອງສິນຄ້າ ໂດຍນໍາໃຊ້ຕົວອັກສອນໂຣແມັງ I, II ແລະ III ເພື່ອເລືອກໃຊ້ພາຊະນະບັນຈຸ ໃຫ້ເໝາະສົມກັບລະດັບຄວາມເປັນອັນຕະລາຍຂອງສິນຄ້າ;

7. **ສະຫຼາກສິນຄ້າອັນຕະລາຍ** ໝາຍເຖິງ ຂໍ້ມູນ ທີ່ໃຊ້ສື່ສານເຖິງ ປະເພດ ແລະ ລັກສະນະ ຄວາມເປັນອັນຕະລາຍຂອງສິນຄ້າ ຊຶ່ງປະກອບດ້ວຍ ສີພື້ນ, ຕົວເລກ ແລະ ສັນຍາລັກ ທີ່ຕິດໃສ່ພາຊະນະບັນຈຸ ຫຼື ຫີບຫໍ່ທີ່ມີຂະໜາດນ້ອຍ;

8. **ປ້າຍສິນຄ້າອັນຕະລາຍ** ໝາຍເຖິງ ຂໍ້ມູນ ທີ່ໃຊ້ສື່ສານເຖິງ ປະເພດ ແລະ ລັກສະນະ ຄວາມເປັນອັນຕະລາຍຂອງສິນຄ້າ ຊຶ່ງປະກອບດ້ວຍ ສີພື້ນ, ຕົວເລກ ແລະ ສັນຍາລັກ ທີ່ຕິດໃສ່ພາຊະນະບັນຈຸ ທີ່ມີຂະໜາດໃຫຍ່;

9. **ເຄື່ອງໝາຍສິນຄ້າອັນຕະລາຍ** ໝາຍເຖິງ ສັນຍາລັກ ທີ່ສະແດງລັກສະນະສະເພາະ ຂອງສິນຄ້າອັນຕະລາຍ ທີ່ບັນຈຸຢູ່ໃນພາຊະນະບັນຈຸ, ຫີບຫໍ່ ຫຼື ພາຊະນະບັນຈຸທີ່ມີຂະໜາດໃຫຍ່ ເປັນຕົ້ນ ເຄື່ອງໝາຍສະແດງຄວາມເປັນອັນຕະລາຍຕໍ່ສິ່ງແວດລ້ອມ, ເລກໝາຍຂອງສະຫະປະຊາຊາດ, ທາດທີ່ມີອຸນຫະພູມສູງ;

10. **ເລກໝາຍຂອງສະຫະປະຊາຊາດ** ໝາຍເຖິງ ເລກລະຫັດ ສີ່ຫຼັກ ທີ່ກໍານົດໂດຍອີງການສະຫະປະຊາຊາດ ວ່າດ້ວຍການຂົນສົ່ງສິນຄ້າອັນຕະລາຍ ເພື່ອໃຊ້ລະບຸ ທາດ ແລະ ວັດຖຸ ທີ່ເປັນສິນຄ້າອັນຕະລາຍ;

11. **ປ້າຍສີສົ້ມ** ໝາຍເຖິງ ປ້າຍສະທ້ອນແສງສີສົ້ມ ທີ່ຕິດໃສ່ພາຊະນະບັນຈຸ ທີ່ມີຂະໜາດໃຫຍ່ ທາງດ້ານ ຊ້າຍ ແລະ ຂວາ, ຕິດໃສ່ທາງດ້ານ ໜ້າ ແລະ ຫຼັງ ຂອງຍານພາຫະນະ ເພື່ອໃຫ້ຮູ້ວ່າແມ່ນຍານພາຫະນະຂົນສົ່ງສິນຄ້າອັນຕະລາຍ;

12. **ຄໍາແນະນໍາດ້ານເຕັກນິກວິຊາການກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ** ໝາຍເຖິງ ຄູ່ມືກ່ຽວກັບວິທີການ, ຂັ້ນຕອນ ປະຕິບັດ ໃນກໍລະນີເກີດເຫດສຸກເສີນ ສໍາລັບພະນັກງານຂັບຂີ່ຍານພາຫະນະ ແລະ ພະນັກງານປະຈໍາຍານພາຫະນະ ທາງບົກ ແລະ ທາງລົດໄຟ;

13. **ຜູ້ສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງສິນຄ້າ ຫຼື ຜູ້ທີ່ໄດ້ຮັບມອບໝາຍ ທີ່ເປັນຄູ່ສັນຍາຂົນສົ່ງ ກັບຜູ້ດຳເນີນການຂົນສົ່ງສິນຄ້າ ອັນຕະລາຍ;

14. **ຜູ້ຮັບສິນຄ້າອັນຕະລາຍ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີສິດຮັບເອົາສິນຄ້າ ຈາກຜູ້ດຳເນີນການຂົນສົ່ງ ສິນຄ້າອັນຕະລາຍ;

15. **ລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ** ໝາຍເຖິງ ຂໍ້ຕົກລົງສາກົນ ວ່າດ້ວຍ ການຂົນສົ່ງສິນຄ້າອັນຕະລາຍທາງບົກ ຂອງອົງການສະຫະປະຊາຊາດ (Agreement concerning the International Carriage of Dangerous Goods by Road "ADR") ແລະ ລະບຽບການສາກົນ ວ່າດ້ວຍການຂົນສົ່ງສິນຄ້າອັນຕະລາຍທາງລົດໄຟ ຂອງອົງການສະຫະປະຊາຊາດ (The Regulation concerning the International Carriage of Dangerous Goods by Rail "RID");

16. **ຈັນຍາບັນວິຊາຊີບການຂົນສົ່ງສິນຄ້າອັນຕະລາຍທາງບົກ** ໝາຍເຖິງ ຄຸນສົມບັດ ແລະ ກິດການ ປະພຶດຂອງ ຜູ້ຂັບຂີ່, ຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ພະນັກງານຂັບລົດໄຟ ຕ້ອງປະຕິບັດ ຢ່າງເຂັ້ມງວດ ເພື່ອຮັບປະກັນຄວາມປອດໄພຕໍ່ ຊີວິດ, ຊັບສິນ ແລະ ສິ່ງແວດລ້ອມ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍ**

ລັດ ຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ດ້ວຍການສະໜອງງົບປະມານ, ປະກອບ ບຸກຄະລາກອນ, ພາຫະນະ ແລະ ວັດຖຸປະກອນ ທີ່ຈຳເປັນ ໃຫ້ແກ່ການເຄື່ອນໄຫວວຽກງານດັ່ງກ່າວ.

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຝຶກອົບຮົມ ແລະ ພັດທະນາ ຄວາມຮູ້, ຄວາມ ສາມາດ ແລະ ປະສົບການ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ໃຫ້ຜູ້ຂັບຂີ່, ພະນັກງານປະຈຳຍານພາຫະນະ, ພະນັກງານຂັບລົດໄຟ, ພະນັກງານປະຈຳຫົວຈັກລົດໄຟ, ທີ່ປຶກສາດ້ານຄວາມ ປອດໄພ ແລະ ບຸກຄົນ ທີ່ກ່ຽວຂ້ອງກັບການຂົນສົ່ງສິນຄ້າອັນຕະລາຍ ຕາມມາດຕະຖານສາກົນ.

ລັດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ຜູ້ດຳເນີນທຸລະກິດຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ພາຍໃນປະເທດ ສາມາດເຂົ້າເຖິງແຫຼ່ງທຶນ ເພື່ອສ້າງຄວາມເຂັ້ມແຂງ ໃນການ ພັດທະນາການຂົນສົ່ງສິນຄ້າອັນຕະລາຍ ທັງພາຍໃນ ແລະ ຕ່າງປະເທດ.

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລົງທຶນເຂົ້າໃນການພັດທະນາວຽກງານຂົນສົ່ງ ສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ໃຫ້ມີການຂະຫຍາຍຕົວ, ສາມາດ ເຊື່ອມໂຍງ, ເຊື່ອມຈອດ ກັບ ພາກພື້ນ ແລະ ສາກົນ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍ**

ການເຄື່ອນໄຫວວຽກງານຂົນສົ່ງສິນຄ້າອັນຕະລາຍ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ລະບຽບການສາກົນກ່ຽວກັບ ການຂົນສົ່ງສິນຄ້າອັນຕະລາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;

2. ຄຸ້ມຄອງ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

3. ຖືກຕ້ອງ, ເປີດເຜີຍ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

4. ຮັບປະກັນການບໍລິການຂົນສົ່ງສິນຄ້າອັນຕະລາຍໃຫ້ ມີຄວາມ ສະດວກ, ວ່ອງໄວ, ເປັນລະບຽບ ຮຽບຮ້ອຍ, ປອດໄພ, ທັນສະໄໝ, ໄດ້ມາດຕະຖານສາກົນ ແລະ ເປັນມິດຕໍ່ສິ່ງແວດລ້ອມ;

5. ປະສານສົມທົບກັບ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງກັບວຽກງານຂົນສົ່ງສິນຄ້າອັນຕະລາຍ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນ ກັບວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຢູ່ ສປປ ລາວ.

ດຳລັດສະບັບນີ້ ບໍ່ນຳໃຊ້ສຳລັບການຂົນສົ່ງສິນຄ້າອັນຕະລາຍ ໃນຂົງເຂດວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນ, ຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນຂ່າວສານ, ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ການຝຶກອົບຮົມ, ການສຳມະນາ, ທັດສະນະສຶກສາ ແລະ ຍົກລະດັບຄວາມຮູ້ຄວາມສາມາດ ທາງດ້ານວິຊາການ-ເຕັກນິກ ແລະ ການລົງທຶນ ປະຕິບັດຕາມ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ໝວດທີ 2
## ປະເພດ ແລະ ລະດັບຄວາມເປັນອັນຕະລາຍຂອງ ສິນຄ້າອັນຕະລາຍ

**ມາດຕາ 8 ປະເພດສິນຄ້າອັນຕະລາຍ**

ສິນຄ້າອັນຕະລາຍ ທີ່ຂົນສົ່ງ ທາງບົກ ແລະ ທາງລົດໄຟ ມີ ເກົ້າ ປະເພດ ດັ່ງນີ້:

1. ທາດ ແລະ ວັດຖຸລະເບີດ;
2. ທາດອາຍ:
   - 2.1 ທາດອາຍໄວໄຟ;
   - 2.2 ທາດອາຍ ບໍ່ໄວໄຟ ບໍ່ເປັນພິດ;
   - 2.3 ທາດອາຍເປັນພິດ.
3. ທາດແຫຼວໄວໄຟ;
4. ທາດແຂງໄວໄຟ, ທາດທີ່ເກີດການເຜົາໄໝ້ໄດ້ເອງ ແລະ ທາດທີ່ສຳຜັດນ້ຳແລ້ວປ່ອຍທາດອາຍໄວໄຟ:
   - 4.1 ທາດແຂງໄວໄຟ;
   - 4.2 ທາດທີ່ມີຄວາມສ່ຽງໃນການ ເກີດຄວາມຮ້ອນ ແລະ ລຸກໄໝ້ໄດ້ເອງ;
   - 4.3 ທາດທີ່ສຳຜັດນ້ຳແລ້ວປ່ອຍທາດອາຍໄວໄຟ.
5. ທາດອ໋ອກຊີໄດຊ໌ ແລະ ທາດເປີອ໋ອກໄຊອິນຊີ:
   - 5.1 ທາດອ໋ອກຊີໄດຊ໌;
   - 5.2 ທາດເປີອ໋ອກໄຊອິນຊີ.
6. ທາດ ພິດ ແລະ ທາດຕິດເຊື້ອ:
   - 6.1 ທາດພິດ;
   - 6.2 ທາດຕິດເຊື້ອ.
7. ທາດກຳມັນຕະພາບລັງສີ;

8. ທາດກັດເປື່ອຍ;

9. ທາດ ແລະ ວັດຖຸອັນຕະລາຍອື່ນ.

ສິນຄ້າອັນຕະລາຍແຕ່ລະປະເພດ ທີ່ຂົນສົ່ງ ທາງບົກ ແລະ ທາງລົດໄຟ ຕ້ອງກຳນົດລາຍລະອຽດຂອງ ສິນຄ້າ ເປັນຕົ້ນ ເລກໝາຍ, ຊື່, ປະເພດ, ລະດັບຄວາມເປັນອັນຕະລາຍ ໂດຍປະຕິບັດຕາມ ກົດໝາຍຂອງ ສປປ ລາວ ແລະ ລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ.

**ມາດຕາ 9 ທາດ ແລະ ວັດຖຸ ລະເບີດ**

ທາດ ແລະ ວັດຖຸ ລະເບີດ ແມ່ນ ສິນຄ້າອັນຕະລາຍປະເພດ 1 ທີ່ເປັນຂອງແຂງ, ຂອງແຫຼວ ແລະ ທາດປະສົມ ທີ່ເກີດປະຕິກິລິຍາເຄມີ ຢ່າງວ່ອງໄວ, ແຮງດັນ, ພະລັງງານຄວາມຮ້ອນ, ທາດອາຍ, ລັງສີ, ຄື້ນ, ແສງ, ສຽງ ທີ່ເຮັດໃຫ້ເກີດການລະເບີດ ແລະ ທຳລາຍພື້ນທີ່ອ້ອມຂ້າງ.

**ມາດຕາ 10 ທາດອາຍ**

ທາດອາຍ ແມ່ນ ສິນຄ້າອັນຕະລາຍປະເພດ 2 ທີ່ເປັນທາດອາຍ ມີອຸນຫະພູມ ຫ້າສິບ ອົງສາເຊ (50°C) ແລະ ມີຄວາມດັນອາຍຫຼາຍກວ່າ ສາມຮ້ອຍ ກິໂລປັສການ (300 KPa) ຫຼື ທາດອາຍທັງໝົດ ທີ່ມີ ອຸນຫະພູມ ຊາວ ອົງສາເຊ (20°C) ແລະ ຄວາມດັນບັນຍາກາດ ໜຶ່ງຮ້ອຍໜຶ່ງຈຸດສາມ ກິໂລປັສການ (101,3 KPa) ລວມທັງທາດອາຍ ບີບອັດ, ທາດອາຍພິດ ແລະ ທາດອາຍທີ່ຢູ່ໃນສະພາບຂອງແຫຼວ.

ສິນຄ້າອັນຕະລາຍປະເພດ 2 ມີ ສາມ ຊະນິດ ດັ່ງນີ້:

1. ຊະນິດ 2.1 ຊຶ່ງແມ່ນ ທາດອາຍໄວໄຟ ທີ່ສາມາດຕິດໄຟໄດ້ຕັ້ງແຕ່ ສິບສອງສ່ວນຮ້ອຍ (12%) ຂຶ້ນໄປ ເມື່ອປະສົມກັບອາກາດ ທີ່ອຸນຫະພູມ ຊາວ ອົງສາເຊ (20°C) ແລະ ຄວາມດັນບັນຍາກາດມາດຕະຖານ ຢູ່ ໜຶ່ງຮ້ອຍໜຶ່ງຈຸດສາມ ກິໂລປັສການ (101,3 KPa) ເປັນຕົ້ນ ທາດອາຍ ນ້ຳມັນແຫຼວ (LPG), ອາເຊທີລີນ, ໄຮໂດຣເຈນ;

2. ຊະນິດ 2.2 ຊຶ່ງແມ່ນ ທາດອາຍ ບໍ່ໄວໄຟ ແລະ ບໍ່ເປັນພິດ ທີ່ສາມາດເຈືອຈາງ ຫຼື ທົດແທນອົກຊີ ໃນອາກາດອ້ອມຂ້າງ ທີ່ປ່ອຍອອກຊີເຈນທີ່ອາດຈະເຮັດໃຫ້ເກີດການເຜົາໄໝ້ຂອງວັດສະດຸອື່ນຫຼາຍກວ່າ ອາກາດອ້ອມຂ້າງ ເປັນຕົ້ນ ທາດອາຍ ຄາບອນໄດອອກໄຊ, ໄນໂຕຣເຈນ, ອາຣົກອນ;

3. ຊະນິດ 2.3 ຊຶ່ງແມ່ນ ທາດອາຍພິດ ທີ່ມີຄຸນລັກສະນະເປັນພິດ ຫຼື ກັດເປື່ອຍ ຫຼື ເປັນອັນຕະລາຍຕໍ່ ສຸຂະພາບ ເປັນຕົ້ນ ທາດອາຍ ແອມໂມເນຍ, ຄຣໍລີນ, ໄຮໂດຣເຈນຊຸນຟີ.

**ມາດຕາ 11 ທາດແຫຼວໄວໄຟ**

ທາດແຫຼວໄວໄຟ ແມ່ນ ສິນຄ້າອັນຕະລາຍປະເພດ 3 ທີ່ເປັນຂອງແຫຼວໄວໄຟ ຫຼື ວັດຖຸທີ່ມີທາດພາຍໃນ ເປັນຂອງແຫຼວ ມີອຸນຫະພູມ ຫ້າສິບ ອົງສາເຊ (50°C), ມີຄວາມດັນອາຍບໍ່ເກີນ ສາມຮ້ອຍ ກິໂລປັສການ (300 KPa) ຊຶ່ງບໍ່ເປັນທາດອາຍທີ່ມີຄວາມດັນບັນຍາກາດປົກກະຕິ ຢູ່ທີ່ອຸນຫະພູມ ຊາວ ອົງສາເຊ (20°C) ແລະ ມີຈຸດ ປະກາຍໄຟບໍ່ເກີນ ຫົກສິບ ອົງສາເຊ (60°C) ທີ່ສາມາດຕິດໄຟໄດ້ງ່າຍ ເປັນຕົ້ນ ນ້ຳມັນ ແອັດຊັງ, ເອທານອນ, ເຫຼົ້າ.

**ມາດຕາ 12 ທາດແຂງໄວໄຟ, ທາດທີ່ເກີດການເຜົາໄໝ້ໄດ້ເອງ ແລະ ທາດທີ່ສຳຜັດນ້ຳແລ້ວປ່ອຍທາດອາຍໄວໄຟ**

ທາດແຂງໄວໄຟ, ທາດທີ່ເກີດການເຜົາໄໝ້ໄດ້ເອງ ແລະ ທາດທີ່ສຳຜັດນ້ຳແລ້ວປ່ອຍທາດອາຍໄວໄຟ ແມ່ນ ສິນຄ້າອັນຕະລາຍປະເພດ 4 ທີ່ເປັນຂອງແຂງ ຊຶ່ງສາມາດເກີດການເຜົາໄໝ້ໄດ້ເອງ ແລະ ທາດ ທີ່ສຳຜັດ ກັບນ້ຳ ແລ້ວປ່ອຍອາຍໄວໄຟ.

ສິນຄ້າອັນຕະລາຍປະເພດ 4 ມີ ສາມ ຊະນິດ ດັ່ງນີ້:

1. ຊະນິດ 4.1 ຊຶ່ງແມ່ນທາດແຂງໄວໄຟ ທີ່ເກີດປະຕິກິລິຍາໄດ້ເອງ ເມື່ອໄດ້ຮັບຄວາມຮ້ອນ, ມີການຮຸກຖູ ຫຼື ເກີດປະຕິກິລິຍາຄາຍຄວາມຮ້ອນທີ່ຮຸນແຮງ ແລະ ທາດທີ່ເຮັດໃຫ້ເກີດປະຕິກິລິຍາໂພລີເມີ ແລະ ທາດລະເບີດທີ່ເຮັດໃຫ້ຄວາມໄວໃນການເກີດລະເບີດຫຼຸດລົງຈົນກາຍເປັນທາດແຂງໄວໄຟ ເປັນຕົ້ນ ໄມ້ຂີດໄຟ, ຂີ້ເຈຍ (ໂພແທດຊຽມ ໄນເຕຣດ), ມາດ (ຊັນຜີ);

2. ຊະນິດ 4.2 ຊຶ່ງແມ່ນທາດທີ່ມີຄວາມສ່ຽງໃນການ ເກີດຄວາມຮ້ອນ ແລະ ລຸກໄໝ້ໄດ້ເອງ ທີ່ເປັນທາດແຂງ, ທາດປະສົມ ເຖິງຈະມີປະລິມານໜ້ອຍກໍສາມາດຕິດໄຟໄດ້ເອງ ເມື່ອສຳຜັດກັບອາກາດ ເປັນຕົ້ນ ຟອສຟໍຣັດສີຂາວ, ຟອສຟໍຣັດສີເຫຼືອງ, ນວບໝາກພ້າວແຫ້ງ;

3. ຊະນິດ 4.3 ຊຶ່ງແມ່ນທາດທີ່ສຳຜັດກັບນ້ຳແລ້ວປ່ອຍທາດອາຍໄວໄຟ ທີ່ເປັນອັນຕະລາຍ ເປັນຕົ້ນ ທາດການຊຽມຄາລ໌ໄບດ໌, ໂຊດຽມ, ລິທຽມ.

**ມາດຕາ 13 ທາດອ໋ອກຊີໄດຊ໌ ແລະ ທາດເປີອ໋ອກໄຊອິນຊີ**

ທາດອ໋ອກຊີໄດຊ໌ ແລະ ທາດເປີອ໋ອກໄຊອິນຊີ ແມ່ນ ສິນຄ້າອັນຕະລາຍປະເພດ 5 ຊຶ່ງປະກອບດ້ວຍ ສອງ ຊະນິດ ດັ່ງນີ້:

1. ຊະນິດ 5.1 ຊຶ່ງແມ່ນ ທາດອ໋ອກຊີໄດຊ໌ ທີ່ຕົວມັນເອງອາດຈະບໍ່ຕິດໄຟ ແຕ່ໂດຍທົ່ວໄປ ຈະປ່ອຍອົກຊີເຈນທີ່ເຮັດໃຫ້ເກີດ ຫຼື ຊ່ວຍໃຫ້ວັດຖຸອື່ນ ເຜົາໄໝ້ໄດ້ດີ ເປັນຕົ້ນ ດ່າງແປັກມັງການັດ, ໄຮໂດຣເຈນເປີອ໋ອກໄຊດ໌, ແອມໂມນຽມໄນເຕຣດ.

2. ຊະນິດ 5.2 ຊຶ່ງແມ່ນ ທາດເປີອ໋ອກໄຊອິນຊີ ທີ່ສາມາດປ່ອຍອົກຊີແຊນອອກມາ ແລະ ສາມາດເປັນເຊື້ອໄຟໃນຕົວມັນເອງໄດ້. ທາດດັ່ງກ່າວ ເມື່ອເກີດປະຕິກິຍາກັບຄວາມຮ້ອນ ມັນສາມາດລະເບີດໄດ້ ຊຶ່ງຕ້ອງມີການຄວບຄຸມອຸນຫະພູມໃນລະຫວ່າງການຂົນສົ່ງ ເພື່ອປ້ອງກັນການເກີດລະເບີດ.

**ມາດຕາ 14 ທາດພິດ ແລະ ທາດຕິດເຊື້ອ**

ທາດພິດ ແລະ ທາດຕິດເຊື້ອ ແມ່ນ ສິນຄ້າອັນຕະລາຍປະເພດ 6 ຊຶ່ງປະກອບດ້ວຍ ສອງ ຊະນິດ ດັ່ງນີ້:

1. ຊະນິດ 6.1 ຊຶ່ງແມ່ນ ທາດພິດ ຖ້າ ກິນ, ດົມ, ສູບ, ສຳຜັດ ຫຼື ຊຶມເຂົ້າໃນຜິວໜັງ ຈະເປັນອັນຕະລາຍຮ້າຍແຮງຕໍ່ສຸຂະພາບ, ບາດເຈັບສາຫັດ ແລະ ເສຍຊີວິດ ເປັນຕົ້ນ ທາດໂຊດຽມໄຊຢາໄນ, ຢາຂ້າແມງໄມ້, ຢາເບື່ອໜູ;

2. ຊະນິດ 6.2 ຊຶ່ງແມ່ນ ທາດຕິດເຊື້ອ ທີ່ເປັນເຊື້ອພະຍາດ ຈຸລິນຊີ, ແບັກທີເຣັຍ, ຈຸລະໂຣກ, ປາຣາຊິດ, ເຊື້ອຣາ ທີ່ອາດຈະຢູ່ນຳ ສິ່ງເສດເຫຼືອທາງການແພດ ຫຼື ຕົວຢ່າງຈຸລັງໃນຫ້ອງທົດລອງທີ່ມີເຊື້ອພະຍາດ.

**ມາດຕາ 15 ທາດກຳມັນຕະພາບລັງສີ**

ທາດກຳມັນຕະພາບລັງສີ ແມ່ນ ສິນຄ້າອັນຕະລາຍປະເພດ 7 ຊຶ່ງເປັນທາດທີ່ມີໂຄງສ້າງພາຍໃນອາຕອມ ບໍ່ຄົງຕົວ ແລະ ສະຫຼາຍຕົວ ພ້ອມທັງມີການແຜ່ກະຈາຍກຳມັນຕະພາບລັງສີອອກມາຈາກຕົວຂອງມັນຢູ່ຕະຫຼອດເວລາ ເປັນຕົ້ນ ທາດຢູເຣນຽມ, ທາດປູໂຕຣນຽມ, ແຫຼ່ງກຳເນີດລັງສີ.

**ມາດຕາ 16 ທາດກັດເປື່ອຍ**

ທາດກັດເປື່ອຍ ແມ່ນ ສິນຄ້າອັນຕະລາຍປະເພດ 8 ຊຶ່ງເປັນເຄມີ ທີ່ສາມາດກັດເປື່ອຍຮຸນແຮງຕໍ່ຜິວໜັງ, ໂລຫະ, ທຳລາຍວັດຖຸ, ພາຫະນະ, ຍານພາຫະນະ ແລະ ອື່ນໆ ທີ່ມີຄ່າຄວາມເປັນກົດບໍ່ເກີນ 2 (pH) ຫຼື ມີຄ່າຄວາມເປັນດ່າງ ແຕ່ 11.5-14 (pH) ເປັນຕົ້ນ ທາດ ອາຊິດຊູນຟູຣິກ, ໂຊດາໄຟ.

**ມາດຕາ 17 ທາດ ແລະ ວັດຖຸອັນຕະລາຍອື່ນ**

ທາດ ແລະ ວັດຖຸອັນຕະລາຍອື່ນ ແມ່ນ ສິນຄ້າອັນຕະລາຍປະເພດ 9 ຊຶ່ງບໍ່ຈັດຢູ່ໃນ ປະເພດສິນຄ້າອັນຕະລາຍ 1 ຫາ 8 ແຕ່ມີຄວາມເປັນຕະລາຍໃນເວລາຂົນສົ່ງ ເປັນຕົ້ນ ແອັສເບສຕອສ໌, ທາດພີຊີບີ ຂອງໝໍ້ແປງໄຟຟ້າ, ໝໍ້ໄຟລີທຽມ, ໝໍ້ໄຟໄອອອນ, ຖົງລົມນິລະໄພ ຫຼື ຂອງແຫຼວທີ່ຕ້ອງໄດ້ຂົນສົ່ງພາຍໃຕ້ອຸນຫະພູມສູງກວ່າ ໜຶ່ງຮ້ອຍ ອົງສາເຊ (100°C) ແລະ ຂອງແຂງທີ່ຕ້ອງໄດ້ຂົນສົ່ງພາຍໃຕ້ອຸນຫະພູມສູງກວ່າ ສອງຮ້ອຍສີ່ສິບ ອົງສາເຊ (240°C) ເປັນຕົ້ນ ຢາງໝາກຕ່ອຍ, ທາດອື່ນ ທີ່ເປັນອັນຕະລາຍຕໍ່ສິ່ງແວດລ້ອມ.

**ມາດຕາ 18 ລະດັບຄວາມເປັນອັນຕະລາຍຂອງສິນຄ້າອັນຕະລາຍ**

ລະດັບຄວາມເປັນອັນຕະລາຍຂອງສິນຄ້າ ຈັດອອກເປັນກຸ່ມບັນຈຸສິນຄ້າອັນຕະລາຍ ສາມ ລະດັບ ດັ່ງນີ້:

1. ລະດັບ I ອັນຕະລາຍສູງ;
2. ລະດັບ II ອັນຕະລາຍປານກາງ;
3. ລະດັບ III ອັນຕະລາຍຕ່ຳ.

ລະດັບ I ອັນຕະລາຍສູງ ແມ່ນ ທາດ ຫຼື ວັດຖຸ ທີ່ມີລະດັບຄວາມເປັນອັນຕະລາຍສູງ ຕ້ອງນຳໃຊ້ພາຊະນະບັນຈຸ ທີ່ແຂງແຮງ ແລະ ມີຄວາມທົນທານ ສູງ ຕາມລະຫັດພາຊະນະບັນຈຸ X ໂດຍສອດຄ່ອງກັບລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ.

ລະດັບ II ອັນຕະລາຍປານກາງ ແມ່ນ ທາດ ຫຼື ວັດຖຸ ທີ່ມີລະດັບຄວາມເປັນອັນຕະລາຍປານກາງ ຕ້ອງນຳໃຊ້ ພາຊະນະບັນຈຸ ທີ່ແຂງແຮງ ແລະ ມີຄວາມທົນທານ ປານກາງ ຫຼື ສູງ ຕາມລະຫັດພາຊະນະບັນຈຸ Y ຫຼື X ໂດຍສອດຄ່ອງກັບລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ.

ລະດັບ III ອັນຕະລາຍຕ່ຳ ແມ່ນ ທາດ ຫຼື ວັດຖຸ ທີ່ມີລະດັບຄວາມເປັນອັນຕະລາຍຕ່ຳ ຕ້ອງນຳໃຊ້ພາຊະນະບັນຈຸ ທີ່ແຂງແຮງ ແລະ ມີຄວາມທົນທານ ຕ່ຳ, ປານກາງ ຫຼື ສູງ ຕາມລະຫັດພາຊະນະບັນຈຸ Z, Y ຫຼື X ໂດຍສອດຄ່ອງກັບລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ.

## ໝວດທີ 3
## ການກະກຽມການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ

**ມາດຕາ 19 ການກະກຽມການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ**

ການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຕ້ອງກະກຽມ ດັ່ງນີ້:

1. ຈຳແນກປະເພດສິນຄ້າອັນຕະລາຍ;
2. ເລືອກພາຊະນະບັນຈຸ, ການບັນຈຸ ແລະ ການຫຸ້ມຫໍ່ ສິນຄ້າອັນຕະລາຍ;
3. ຕິດ ສະຫຼາກ ແລະ ເຄື່ອງໝາຍໃສ່ພາຊະນະບັນຈຸ ສິນຄ້າອັນຕະລາຍ;
4. ເລືອກ ຍານພາຫະນະ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍ;
5. ຕິດ ປ້າຍ, ເຄື່ອງໝາຍ ແລະ ເຄື່ອງຕິດຕາມລະບົບຕຳແໜ່ງການເຄື່ອນຍ້າຍ (GPS) ໃສ່ຍານພາຫະນະ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍ ທາງບົກ;
6. ຕິດ ປ້າຍ ແລະ ເຄື່ອງໝາຍໃສ່ລົດໄຟ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍ ທາງລົດໄຟ;
7. ກະກຽມ ເອກະສານປະຈຳຍານພາຫະນະ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍ ທາງບົກ;

8. ກະກຽມ ເອກະສານປະຈຳລົດໄຟ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍ ທາງລົດໄຟ;

9. ກະກຽມອຸປະກອນທີ່ຈຳເປັນປະຈຳ ສຳລັບ ຜູ້ຂັບຂີ່ ແລະ ຍານພາຫະນະ ຂົນສົ່ງສິນຄ້າອັນຕະລາຍທາງບົກ;

10. ກະກຽມອຸປະກອນທີ່ຈຳເປັນປະຈຳ ສຳລັບ ພະນັກງານຂັບລົດໄຟ ແລະ ພະນັກງານ ປະຈຳລົດໄຟ.

**ມາດຕາ 20 ການຈຳແນກປະເພດສິນຄ້າອັນຕະລາຍ**

ຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ ຕ້ອງຈຳແນກສິນຄ້າ ຕາມປະເພດ ແລະ ລະດັບຄວາມເປັນອັນຕະລາຍ ຕາມກົດໝາຍ ຂອງ ສປປ ລາວ ແລະ ລະບຽບການສາກົນ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ເພື່ອຮັບປະກັນການເລືອກນຳໃຊ້ ພາຊະນະບັນຈຸ, ຫຸ້ມຫໍ່ ແລະ ພາຫະນະຂົນສົ່ງ ໃຫ້ເໝາະສົມ, ຖືກຕ້ອງ ແລະ ມີຄວາມປອດໄພ ໃນເວລາຂົນສົ່ງ.

**ມາດຕາ 21 ການເລືອກພາຊະນະບັນຈຸ, ການບັນຈຸ ແລະ ການຫຸ້ມຫໍ່ ສິນຄ້າອັນຕະລາຍ**

ຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ ຕ້ອງເລືອກພາຊະນະບັນຈຸ, ການບັນຈຸ ແລະ ການຫຸ້ມຫໍ່ສິນຄ້າອັນຕະລາຍ ທີ່ຈະຂົນສົ່ງ ທາງບົກ ແລະ ທາງລົດໄຟ ໂດຍສອດຄ່ອງກັບມາດຕະຖານເຕັກນິກ ກ່ຽວກັບ ພາຊະນະບັນຈຸ, ການບັນຈຸ ແລະ ການຫຸ້ມຫໍ່ ແລະ ປະຕິບັດຕາມກົດໝາຍຂອງ ສປປ ລາວ ແລະ ລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ.

ສຳລັບ ຂັ້ນຕອນ ແລະ ວິທີການກ່ຽວກັບການເລືອກພາຊະນະບັນຈຸ, ການບັນຈຸ ແລະ ການຫຸ້ມຫໍ່ສິນຄ້າອັນຕະລາຍ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 22 ການຕິດ ສະຫຼາກ ແລະ ເຄື່ອງໝາຍ ໃສ່ພາຊະນະບັນຈຸ, ຫີບຫໍ່ ສິນຄ້າອັນຕະລາຍ**

ຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ ຕ້ອງຕິດ ສະຫຼາກ ແລະ ເຄື່ອງໝາຍສິນຄ້າອັນຕະລາຍ ຢ່າງແໜ້ນໜາ, ທົນທານ ແລະ ເຫັນແຈ້ງ ຊັດເຈນ ຕາມລະຫັດຂອງສິນຄ້າອັນຕະລາຍ ໃສ່ພາຊະນະບັນຈຸ ແລະ ຫີບຫໍ່ ສິນຄ້າອັນຕະລາຍ ຕາມລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ.

ສຳລັບ ຂັ້ນຕອນ ແລະ ວິທີການກ່ຽວກັບການຕິດ ສະຫຼາກ ແລະ ເຄື່ອງໝາຍ ສິນຄ້າອັນຕະລາຍ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 23 ການເລືອກໃຊ້ ຍານພາຫະນະ ແລະ ພາຫະນະຂົນສົ່ງສິນຄ້າອັນຕະລາຍ**

ຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ ຕ້ອງເລືອກໃຊ້ ຍານພາຫະນະ ແລະ ພາຫະນະຂົນສົ່ງສິນຄ້າອັນຕະລາຍ ໂດຍປະຕິບັດຕາມມາດຕະຖານ ເຕັກນິກ ແລະ ມີຄວາມເໝາະສົມກັບລັກສະນະ, ປະເພດ ແລະ ລະດັບຄວາມເປັນອັນຕະລາຍ ຂອງສິນຄ້າອັນຕະລາຍ, ກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ໂດຍມີການຢັ້ງຢືນ ຈາກກະຊວງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 24 ການຕິດ ປ້າຍ ແລະ ເຄື່ອງໝາຍ ໃສ່ຍານພາຫະນະ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍທາງບົກ**

ຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍທາງບົກ ຕ້ອງຕິດ ປ້າຍ ແລະ ເຄື່ອງໝາຍ ສິນຄ້າອັນຕະລາຍຢ່າງ ແໜ້ນໜາ, ທົນທານ, ເຫັນແຈ້ງ ແລະ ຊັດເຈນ ໃສ່ ຍານພາຫະນະ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍທາງບົກ ໂດຍປະຕິບັດຕາມ ຂໍ້ຕົກລົງ ວ່າດ້ວຍການຂົນສົ່ງສິນຄ້າອັນຕະລາຍທາງບົກ ຂອງອົງການສະຫະປະຊາຊາດ.

**ມາດຕາ 25 ການຕິດ ປ້າຍ ແລະ ເຄື່ອງໝາຍໃສ່ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍທາງລົດໄຟ**

ຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍ ທາງລົດໄຟ ຕ້ອງຕິດ ປ້າຍ ແລະ ເຄື່ອງໝາຍ ສິນຄ້າອັນຕະລາຍ ຢ່າງ ແໜ້ນໜາ, ທົນທານ, ເຫັນແຈ້ງ ແລະ ຊັດເຈນ ໃສ່ ພາຫະນະຂົນສົ່ງສິນຄ້າອັນຕະລາຍທາງລົດໄຟ ໂດຍ ປະຕິບັດຕາມລະບຽບການສາກົນ ວ່າດ້ວຍການຂົນສົ່ງສິນຄ້າອັນຕະລາຍທາງລົດໄຟ ຂອງອົງການສະຫະປະຊາຊາດ.

**ມາດຕາ 26 ການກະກຽມ ເອກະສານປະຈຳ ຍານພາຫະນະ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍທາງບົກ**

ຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍທາງບົກ ຕ້ອງກະກຽມເອກະສານປະຈຳ ຍານພາຫະນະ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍທາງບົກ ດັ່ງນີ້:

1. ເອກະສານນຳສົ່ງສິນຄ້າ;
2. ຄຳແນະນຳດ້ານເຕັກນິກວິຊາການ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ຕາມຂໍ້ຕົກລົງສາກົນ ວ່າດ້ວຍການຂົນສົ່ງສິນຄ້າອັນຕະລາຍທາງບົກ ຂອງອົງການສະຫະປະຊາຊາດ;
3. ໃບຢັ້ງຢືນການຝຶກອົບຮົມຂອງຜູ້ຂັບຂີ່ຍານພາຫະນະຂົນສົ່ງສິນຄ້າອັນຕະລາຍ;
4. ໃບອະນຸຍາດການຂັບຂີ່ຍານພາຫະນະຂົນສົ່ງສິນຄ້າອັນຕະລາຍທາງບົກ;
5. ເອກະສານປະຈຳຕົວຂອງຜູ້ຂັບຂີ່;
6. ໃບຢັ້ງຢືນກວດກາເຕັກນິກຍານພາຫະນະ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍທາງບົກ;
7. ໃບຢັ້ງຢືນຄຸນນະພາບ ແລະ ຄວາມປອດໄພຂອງພາຊະນະບັນຈຸຂະໜາດໃຫຍ່;
8. ເອກະສານອື່ນທີ່ຈຳເປັນ.

ຜູ້ຂັບຂີ່ ຍານພາຫະນະຂົນສົ່ງສິນຄ້າອັນຕະລາຍທາງບົກ ຕ້ອງກວດ ເອກະສານປະຈຳ ຍານພາຫະນະ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍ ກ່ອນການຂັບເຄື່ອນຍານພາຫະນະ.

**ມາດຕາ 27 ການກະກຽມເອກະສານປະຈຳ ລົດໄຟ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍທາງລົດໄຟ**

ຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍທາງລົດໄຟ ຕ້ອງກະກຽມເອກະສານປະຈຳ ລົດໄຟ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍທາງລົດໄຟ ດັ່ງນີ້:

1. ເອກະສານນຳສົ່ງສິນຄ້າ;
2. ຄຳແນະນຳດ້ານເຕັກນິກວິຊາການກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ຕາມລະບຽບການ ວ່າດ້ວຍການຂົນສົ່ງສິນຄ້າອັນຕະລາຍສາກົນທາງລົດໄຟ ຂອງອົງການສະຫະປະຊາຊາດ;
3. ໃບຢັ້ງຢືນການຝຶກອົບຮົມຂອງພະນັກງານຂັບລົດໄຟຂົນສົ່ງສິນຄ້າອັນຕະລາຍ;
4. ເອກະສານປະຈຳຕົວຂອງພະນັກງານຂັບລົດໄຟ;
5. ໃບຢັ້ງຢືນກວດກາເຕັກນິກ ຫົວຈັກລົດໄຟ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍທາງລົດໄຟ;
6. ໃບຢັ້ງຢືນຄຸນນະພາບ ແລະ ຄວາມປອດໄພຂອງພາຊະນະບັນຈຸຂະໜາດໃຫຍ່;
7. ເອກະສານອື່ນທີ່ຈຳເປັນ.

ພະນັກງານຂັບລົດໄຟ ຕ້ອງກວດ ເອກະສານປະຈຳ ລົດໄຟ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍ ທາງລົດໄຟ ກ່ອນການຂັບເຄື່ອນລົດໄຟ.

**ມາດຕາ 28 ການກະກຽມອຸປະກອນ ທີ່ຈຳເປັນ ສຳລັບ ຜູ້ຂັບຂີ່, ພະນັກງານປະຈຳຍານພາຫະນະ ແລະ ພາຫະນະຂົນສົ່ງສິນຄ້າອັນຕະລາຍທາງບົກ**

ຜູ້ຂັບຂີ່ ແລະ ພະນັກງານປະຈຳຍານພາຫະນະຂົນສົ່ງສິນຄ້າອັນຕະລາຍທາງບົກ ຕ້ອງກະກຽມອຸປະກອນທີ່ຈຳເປັນ ສຳລັບຕົນເອງ ຕາມມາດຕະຖານເຕັກນິກ ເປັນຕົ້ນ ເສື້ອສະທ້ອນແສງ, ໄຟສາຍ, ຖົງມື, ແວ່ນຕານິລະໄພ.

ຜູ້ຂັບຂີ່ ແລະ ພະນັກງານປະຈຳຍານພາຫະນະຂົນສົ່ງສິນຄ້າອັນຕະລາຍ ທາງບົກ ຕ້ອງກະກຽມອຸປະກອນທີ່ຈຳເປັນ ປະຈຳຍານພາຫະນະ ຕາມມາດຕະຖານເຕັກນິກ ເປັນຕົ້ນ ບັ້ງມອດໄຟຕາມ ປະເພດ ແລະ ຊະນິດ ຂອງສິນຄ້າອັນຕະລາຍ, ຫຼິ່ມຂັດຕີນຍານພາຫະນະ, ຈອຍສະທ້ອນແສງ, ສາມຫຼ່ຽມສະທ້ອນແສງ ຫຼື ໄຟກະພິບ ຢ່າງໜ້ອຍ ສອງ ອັນຕໍ່ຄັນ, ນ້ຳລ້າງຕາ ສຳລັບຜູ້ຂັບຂີ່ຍານພາຫະນະ ຫຼື ຜູ້ຊ່ວຍຜູ້ຂັບຂີ່ຍານພາຫະນະ.

ໃນກໍລະນີການຂົນສົ່ງສິນຄ້າອັນຕະລາຍ ທີ່ເປັນທາດອາຍແກັສ (2.3) ແລະ ທາດພິດ (6.1) ຕ້ອງມີຊຸດພີອີ (PE), ໜ້າກາກສຸກເສີນສຳລັບໜີຈາກບໍລິເວນ ຫຼື ສະຖານທີ່ເກີດອຸບປະຕິເຫດ ຕາມ ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ແລະ ຂໍ້ຕົກລົງ ວ່າດ້ວຍການຂົນສົ່ງສິນຄ້າອັນຕະລາຍທາງບົກ.

ໃນກໍລະນີການຂົນສົ່ງສິນຄ້າອັນຕະລາຍ ທີ່ເປັນ ທາດແຫຼວໄວໄຟ (3), ທາດແຂງໄວໄຟ (4.1), ທາດທີ່ສຳພັດກັບນ້ຳ ແລ້ວປ່ອຍທາດອາຍໄວໄຟ (4.3), ທາດກັດເປື່ອຍ (8) ແລະ ທາດ ແລະ ວັດຖຸອັນຕະລາຍອື່ນ (9) ຕ້ອງມີ ຊວ້ານ, ຜ້າບັດ ແລະ ຖຸຢາງ ຕາມ ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ແລະ ຂໍ້ຕົກລົງສາກົນ ວ່າດ້ວຍການຂົນສົ່ງສິນຄ້າອັນຕະລາຍທາງບົກ ຂອງອົງການສະຫະປະຊາຊາດ.

**ມາດຕາ 29 ການກະກຽມອຸປະກອນທີ່ຈຳເປັນ ສຳລັບ ພະນັກງານຂັບລົດໄຟ ແລະ ພະນັກງານປະຈຳລົດໄຟ**

ພະນັກງານຂັບລົດໄຟ ແລະ ພະນັກງານປະຈຳລົດໄຟ ຕ້ອງກະກຽມອຸປະກອນທີ່ຈຳເປັນ ສຳລັບຕົນເອງຕາມມາດຕະຖານເຕັກນິກ ເປັນຕົ້ນ ເສື້ອສະທ້ອນແສງ ແລະ ໄຟສາຍ ຢູ່ໃນຫ້ອງຂັບລົດໄຟ ເພື່ອຮັບປະກັນຄວາມປອດໄພ ຕາມ ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ແລະ ລະບຽບການສາກົນ ວ່າດ້ວຍການຂົນສົ່ງສິນຄ້າອັນຕະລາຍທາງລົດໄຟ ຂອງອົງການສະຫະປະຊາຊາດ.

## ໝວດທີ 4
## ການອະນຸຍາດ ແລະ ການດຳເນີນ ການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ພາຍໃນປະເທດ ແລະ ຂ້າມແດນ

**ມາດຕາ 30 ການຂໍອະນຸຍາດຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ ພາຍໃນປະເທດ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ພາຍໃນປະເທດ ທີ່ໃຫ້ການບໍລິການຂົນສົ່ງໃນຕົວເມືອງ, ພາຍໃນ ນະຄອນຫຼວງ, ແຂວງ ຫຼື ລະຫວ່າງ ນະຄອນຫຼວງ ກັບ ແຂວງ, ແຂວງ ກັບ ແຂວງ ຫຼື ລະຫວ່າງ ເມືອງ, ນະຄອນ ກັບ ເມືອງ ຕ້ອງຂໍອະນຸຍາດນຳກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງອື່ນ ທີ່ກ່ຽວຂ້ອງ ພ້ອມທັງປະຕິບັດຕາມ ກົດໝາຍຂອງ ສປປ ລາວ, ລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ການຂໍອະນຸຍາດຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ພາຍໃນປະເທດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ສັນຍາບໍລິການຂົນສົ່ງ, ສັນຍາ ຊື້ ຂາຍ ສິນຄ້າອັນຕະລາຍ ຈາກ ຕົ້ນທາງ ແລະ ປາຍທາງ;
2. ແຜນການ ໂດຍມີການກຳນົດ ສາຍທາງ, ເວລາ ແລະ ໄລຍະເວລາ ໃນການຂົນສົ່ງ;

3. ມີຍານພາຫະນະຂົນສົ່ງສິນຄ້າອັນຕະລາຍສະເພາະຕາມປະເພດສິນຄ້າ;

4. ສິນຄ້າອັນຕະລາຍ ຖືກຕ້ອງ, ຄົບຖ້ວນ ແລະ ຢູ່ໃນສະພາບເດີມ ຕາມໃບນຳສົ່ງສິນຄ້າ;

5. ສຳເນົາໃບອະນຸຍາດເຄື່ອນຍ້າຍສິນຄ້າອັນຕະລາຍ ຈາກຂະແໜງການທີ່ກ່ຽວຂ້ອງ;

6. ເງື່ອນໄຂອື່ນ ທີ່ຈຳເປັນ.

**ມາດຕາ 31 ການຂໍອະນຸຍາດຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຂ້າມແດນ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຂ້າມແດນ ຕ້ອງຂໍອະນຸຍາດ ເປັນຖ້ຽວ ນຳກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງອື່ນ ທີ່ກ່ຽວຂ້ອງ ໂດຍປະສານສົມທົບກັບກະຊວງການເງິນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

ການຂໍອະນຸຍາດຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຂ້າມແດນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ສັນຍາບໍລິການຂົນສົ່ງ, ສັນຍາ ຊື້ ຂາຍ ສິນຄ້າອັນຕະລາຍ ຈາກ ປະເທດ ຕົ້ນທາງ ແລະ ປາຍທາງ;

2. ຖ້າເປັນຜູ້ດຳເນີນການຂົນສົ່ງ, ຈັດສົ່ງ, ນຳເຂົ້າ-ສົ່ງອອກ ສິນຄ້າອັນຕະລາຍຂອງຕ່າງປະເທດ ຕ້ອງມີການຄ້ຳປະກັນຈາກຜູ້ດຳເນີນການຂົນສົ່ງ ຫຼື ຈັດສົ່ງ ຂອງ ສປປ ລາວ ພ້ອມທັງເປັນຜູ້ຕາງໜ້າໃນການຂໍອະນຸຍາດຂົນສົ່ງສິນຄ້າອັນຕະລາຍ;

3. ການຄ່ຽນຖ່າຍສິນຄ້າອັນຕະລາຍຢູ່ດ່ານຊາຍແດນສາກົນ ຕ້ອງດຳເນີນຢູ່ໃນພື້ນທີ່ສະເພາະ ທີ່ຂະແໜງການທີ່ກ່ຽວຂ້ອງ ກຳນົດໄວ້;

4. ແຜນການ ໂດຍມີການກຳນົດ ສາຍທາງ, ເວລາ, ໄລຍະເວລາ ໃນການຂົນສົ່ງ ແລະ ເຂົ້າ-ອອກ ດ່ານສາກົນ ທີ່ໄດ້ກຳນົດໄວ້;

5. ສິນຄ້າອັນຕະລາຍຖືກຕ້ອງ, ຄົບຖ້ວນ ແລະ ຢູ່ໃນສະພາບເດີມ ຕາມໃບນຳສົ່ງສິນຄ້າ;

6. ສຳເນົາໃບອະນຸຍາດນຳເຂົ້າ-ສົ່ງອອກ ແລະ ຜ່ານແດນ ສິນຄ້າອັນຕະລາຍ ຈາກຂະແໜງການທີ່ກ່ຽວຂ້ອງ;

7. ເງື່ອນໄຂອື່ນທີ່ຈຳເປັນ.

**ມາດຕາ 32 ການອະນຸຍາດຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ**

ກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາ ອອກໃບອະນຸຍາດຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ພາຍໃນ ເຈັດ ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ກວດກາເອກະສານ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ; ໃນກໍລະນີ ທີ່ບໍ່ສາມາດອອກໃບອະນຸຍາດຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ພາຍໃນກຳນົດເວລາດັ່ງກ່າວ.

ໃບອະນຸຍາດຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ພາຍໃນປະເທດ ມີອາຍຸການ ໜຶ່ງປີ ແລະ ສາມາດຕໍ່ໄດ້.

ສຳລັບໃບອະນຸຍາດຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຂ້າມແດນ ສາມາດນຳໃຊ້ໄດ້ພຽງຄັ້ງດຽວ.

**ມາດຕາ 33 ການດຳເນີນການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ**

ການດຳເນີນການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຕ້ອງປະຕິບັດ ດັ່ງນີ້:

1. ການກວດກາຄວາມພ້ອມຂອງ ສິນຄ້າອັນຕະລາຍທີ່ຈະຂົນສົ່ງ, ຍານພະຫະນະ, ພາຫະນະຂົນສົ່ງ ລວມທັງ ອຸປະກອນອື່ນ ທີ່ກ່ຽວຂ້ອງກັບການຂົນສົ່ງ ຕ້ອງຢູ່ໃນສະພາບສົມບູນ ກ່ອນການ ບັນທຸກ, ຄ່ຽນຖ່າຍ ແລະ ເຄື່ອນຍ້າຍ ສິນຄ້າອັນຕະລາຍ ເຂົ້າໃສ່ຍານພະຫະນະ ແລະ ພາຫະນະຂົນສົ່ງ;

2. ການ ບັນທຸກ, ຄ່ຽນຖ່າຍ ແລະ ເຄື່ອນຍ້າຍສິນຄ້າອັນຕະລາຍ ຕ້ອງປະຕິບັດຕາມລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ;

3. ການຄ່ຽນຖ່າຍສິນຄ້າອັນຕະລາຍ ຂຶ້ນ ຫຼື ລົງ ຈາກຍານພາຫະນະ ຫຼື ພາຫະນະຂົນສົ່ງ ຕ້ອງມອດເຄື່ອງຈັກຍານພາຫະນະ ຍົກເວັ້ນ ມີຄວາມຈຳເປັນ ຕິດເຄື່ອງຈັກຍານພາຫະນະໄວ້ ເພື່ອໃຊ້ໃນການດູດນ້ຳ ຫຼື ນຳໃຊ້ ສຳລັບອຸປະກອນອື່ນ ໃນການຄ່ຽນຖ່າຍ ສິນຄ້າອັນຕະລາຍ ຂຶ້ນ ຫຼື ລົງ ຈາກຍານພາຫະນະ ຫຼື ພາຫະນະຂົນສົ່ງ;

4. ການ ຄ່ຽນຖ່າຍ ແລະ ເຄື່ອນຍ້າຍ ຕ້ອງມີເຈົ້າໜ້າທີ່ ທີ່ມີຄວາມຮູ້, ຄວາມຊຳນານງານ ເປັນຜູ້ຮັບຜິດຊອບຄວບຄຸມການ ຄ່ຽນຖ່າຍ ແລະ ເຄື່ອນຍ້າຍ;

5. ການຄ່ຽນຖ່າຍສິນຄ້າຢູ່ດ່ານຊາຍແດນບ່ອນທີ່ນຳເຂົ້າ-ສົ່ງອອກ ຫຼື ຜ່ານແດນ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;

6. ການຂົນສົ່ງສິນຄ້າອັນຕະລາຍ ພາຍໃນ ແລະ ຂ້າມແດນ ຕ້ອງໄປຕາມ ສາຍທາງ ແລະ ເວລາ ຕາມການກຳນົດຂອງພາກສ່ວນທີ່ກ່ຽວຂ້ອງ;

7. ຫຼີກເວັ້ນການກະທຳ ທີ່ກໍ່ໃຫ້ເກີດປະກາຍໄຟ ຫຼື ຄວາມຮ້ອນ ໃນລະຫວ່າງການຄ່ຽນຖ່າຍ, ເຄື່ອນຍ້າຍໂດຍສະເພາະ ໃນບໍລິເວນ ຫຼື ພື້ນທີ່ຢູ່ໃກ້ກັບຍານພະຫະນະ ຫຼື ພາຫະນະ ຂົນສົ່ງສິນຄ້າອັນຕະລາຍ;

8. ກໍລະນີຂົນສົ່ງສິນຄ້າອັນຕະລາຍ ແຕ່ສອງ ປະເພດ ຫຼື ຊະນິດຂຶ້ນໄປ ຊຶ່ງມີຄວາມສ່ຽງກໍ່ໃຫ້ເກີດປະຕິກິລິຍາຕໍ່ກັນ ຕ້ອງໄດ້ຄັດແຍກ ສິນຄ້າ ແລະ ພາຫະນະ ທີ່ຈະນຳໃຊ້ໃນການຂົນສົ່ງ ລວມທັງ ແຍກການບັນທຸກສິນຄ້າອັນຕະລາຍ ອອກຈາກການບັນທຸກສິນຄ້າອື່ນ ເຊັ່ນ ການບັນທຸກຜະລິດຕະພັນສິນຄ້າ ສຳລັບການບໍລິໂພກ ແລະ ອາຫານສັດ ກັບ ສິນຄ້າອັນຕະລາຍບາງປະເພດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສາກົນ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ;

9. ຜູກມັດ, ຍຶດຕິດ ພາຊະນະບັນຈຸສິນຄ້າອັນຕະລາຍໃຫ້ແໜ້ນ ເພື່ອບໍ່ໃຫ້ມີການເຄື່ອນທີ່ ໃນລະຫວ່າງຂົນສົ່ງ, ໃນກໍລະນີ ບັນທຸກສິນຄ້າອັນຕະລາຍໃນຕູ້ສິນຄ້າ ຫຼື ຖັງທີ່ຍົກອອກໄດ້ ຫຼື ເຄື່ອນທີ່ໄດ້ ຕ້ອງລັອກຕູ້ ເພື່ອບໍ່ໃຫ້ຕົກເຮ່ຍອອກຈາກຍານພາຫະນະ ໃນລະຫວ່າງການຂົນສົ່ງ;

10. ບັນຈຸ ແລະ ຄ່ຽນຖ່າຍ ສິນຄ້າອັນຕະລາຍ ອອກຈາກຖັງ ແລະ ໃຫ້ຢູ່ໃນອັດຕາສ່ວນການບັນຈຸຕາມທີ່ໄດ້ກຳນົດໄວ້ ພ້ອມທັງປິດວາວ ຫຼື ຊ່ອງເປີດຕ່າງໆ ເພື່ອບໍ່ໃຫ້ມີການຮົ່ວໄຫຼ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ.

ການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຜ່ານອຸໂມງ ຕ້ອງປະຕິບັດຕາມລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ.

## ໝວດທີ 5
## ແຜນຮັບມື ເຫດສຸກເສີນ ຫຼື ອຸບປະຕິເຫດ ຈາກການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ

### ມາດຕາ 34 ແຜນຮັບມື ເຫດສຸກເສີນ ຫຼື ອຸບປະຕິເຫດ ຈາກການຂົນສົ່ງສິນຄ້າອັນຕະລາຍ

ແຜນຮັບມື ເຫດສຸກເສີນ ຫຼື ອຸບປະຕິເຫດຈາກການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ໃຫ້ປະຕິບັດ ດັ່ງນີ້:

1. ການ ປ້ອງກັນ ແລະ ກະກຽມຄວາມພ້ອມໃນເວລາເກີດ ເຫດສຸກເສີນ ຫຼື ອຸບປະຕິເຫດ;
2. ການປະຕິບັດການທັນທີໃນເວລາເກີດ ເຫດສຸກເສີນ ຫຼື ອຸບປະຕິເຫດ;
3. ການແຈ້ງ ແລະ ລາຍງານ ເຫດສຸກເສີນ ຫຼື ອຸບປະຕິເຫດ;

4. ການແກ້ໄຂ ເຫດສຸກເສີນ ຫຼື ອຸບປະຕິເຫດ;

5. ການໃຊ້ແທນຄ່າເສຍຫາຍ, ການຟື້ນຟູ ພື້ນທີ່ ແລະ ສະພາບແວດລ້ອມ ພາຍຫຼັງເກີດ ເຫດສຸກເສີນ ຫຼື ອຸບປະຕິເຫດ.

**ມາດຕາ 35 ການ ປ້ອງກັນ ແລະ ກະກຽມຄວາມພ້ອມໃນເວລາເກີດ ເຫດສຸກເສີນ ຫຼື ອຸບປະຕິເຫດ**

ຜູ້ດໍາເນີນການຂົນສົ່ງສິນຄ້າອັນຕະລາຍ ຕ້ອງມີ ການ ປ້ອງກັນ ແລະ ກະກຽມຄວາມພ້ອມຮັບມືໃນເວລາເກີດ ເຫດສຸກເສີນ ຫຼື ອຸບປະຕິເຫດແລະ ສ້າງແຜນຮັບມືໃນກໍລະນີເກີດ ເຫດສຸກເສີນ ຫຼື ອຸບປະຕິເຫດ ພ້ອມທັງ ຈັດຝຶກຊ້ອມແຜນການຕອບໂຕ້ຕາມລະດັບຄວາມຮ້າຍແຮງຂອງ ເຫດສຸກເສີນ ຫຼື ອຸບປະຕິເຫດ ທີ່ຈະເກີດຂຶ້ນ ຮ່ວມກັບຂະແໜງການໂຍທາທິການ ແລະ ຂົນສົ່ງ, ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

ແຜນຮັບມື ເຫດສຸກເສີນ ຫຼື ອຸບປະຕິເຫດ ຕ້ອງທົບທວນ ແລະ ປັບປຸງ ເປັນແຕ່ລະໄລຍະ ພ້ອມທັງ ສົ່ງແຜນການດັ່ງກ່າວ ໃຫ້ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ໜ່ວຍກູ້ໄພ ທີ່ຍານພາຫະນະຂົນສົ່ງສິນຄ້າອັນຕະລາຍແລ່ນຜ່ານ.

**ມາດຕາ 36 ການປະຕິບັດການທັນທີໃນກໍລະນີເກີດ ເຫດສຸກເສີນ ຫຼື ອຸບປະຕິເຫດ**

ເມື່ອເກີດ ເຫດສຸກເສີນ ຫຼື ອຸບປະຕິເຫດ ຈາກການຂົນສົ່ງສິນຄ້າອັນຕະລາຍ ຜູ້ຂັບຂີ່ຍານພາຫະນະ ແລະ ພະນັກງານ ປະຈໍາຍານພາຫະນະ ຕ້ອງປະຕິບັດການທັນທີ ຕາມຄໍາແນະນໍາຂອງກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ຕາມລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ.

ຜູ້ຂັບຂີ່ຍານພາຫະນະ ແລະ ພະນັກງານປະຈໍາຍານພາຫະນະ ຕ້ອງນໍາໃຊ້ອຸປະກອນປະຈໍາຍານພາຫະນະ ເພື່ອຊ່ວຍຫຼຸດຜ່ອນຜົນກະທົບຕໍ່ ຊີວິດ, ຊັບສິນ ແລະ ສິ່ງແວດລ້ອມ.

**ມາດຕາ 37 ການແຈ້ງ ແລະ ລາຍງານ ເຫດສຸກເສີນ ຫຼື ອຸບປະຕິເຫດ**

ເມື່ອເກີດ ເຫດສຸກເສີນ ຫຼື ອຸບປະຕິເຫດ ຈາກການຂົນສົ່ງສິນຄ້າອັນຕະລາຍ ຜູ້ຂັບຂີ່ ແລະ ພະນັກງານປະຈໍາຍານພາຫະນະ ຫຼື ຜູ້ເຫັນເຫດການ ຕ້ອງແຈ້ງທັນທີ ຕໍ່ ປະຊາຊົນທີ່ອາໄສຢູ່ບໍລິເວນ ຫຼື ພື້ນທີ່ໃກ້ຄຽງ, ຕໍາຫຼວດສະກັດກັ້ນ ແລະ ຕ້ານອັກຄີໄພ, ຕໍາຫຼວດຈະລາຈອນ, ຕໍາຫຼວດທາງຫຼວງ, ເຈົ້າໜ້າທີ່ລົດໄຟ, ໜ່ວຍກູ້ໄພ, ອົງການຄຸ້ມຄອງວຽກງານຂົນສົ່ງສິນຄ້າອັນຕະລາຍ, ຜູ້ດໍາເນີນການຂົນສົ່ງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເພື່ອດໍາເນີນການແກ້ໄຂ ໃຫ້ທັນການ.

ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຕ້ອງລາຍງານກ່ຽວກັບ ເຫດສຸກເສີນ ຫຼື ອຸບປະຕິເຫດທີ່ເກີດຂຶ້ນ ເປັນຕົ້ນ ຜົນກະທົບ, ການຊົດເຊີຍຄ່າເສຍຫາຍ, ການຟື້ນຟູ ໃຫ້ຂັ້ນເທິງຂອງຕົນ.

**ມາດຕາ 38 ການແກ້ໄຂ ເຫດສຸກເສີນ ຫຼື ອຸບປະຕິເຫດ**

ການແກ້ໄຂ ເຫດສຸກເສີນ ຫຼື ອຸບປະຕິເຫດ ຈາກການຂົນສົ່ງສິນຄ້າອັນຕະລາຍ ຕ້ອງປະຕິບັດ ດັ່ງນີ້:

1. ປະຕິບັດຕາມແຜນຮັບມື ເຫດສຸກເສີນ ຫຼື ອຸບປະຕິເຫດທັນທີ;

2. ຂະແໜງການທີ່ກ່ຽວຂ້ອງເປັນຜູ້ກໍານົດຂອບເຂດ ແລະ ປະກາດເປັນພື້ນທີ່ອັນຕະລາຍ ເມື່ອ ເຫດສຸກເສີນ ຫຼື ອຸບປະຕິເຫດ ຫາກມີຜົນກະທົບຮ້າຍແຮງ ເກີນຄວາມສາມາດແກ້ໄຂນັ້ນ ຂະແໜງການທີ່ກ່ຽວຂ້ອງ ຕ້ອງສະເໜີຕໍ່ ຂັ້ນເທິງຖັດຕົນ ໃຫ້ປະກາດເຂດດັ່ງກ່າວເປັນເຂດອັນຕະລາຍ;

3. ຂະແໜງການທີ່ກ່ຽວຂ້ອງ ສົມທົບກັບອົງການປົກຄອງທ້ອງຖິ່ນ ຈັດພາຫະນະ, ອຸປະກອນ, ກໍາລັງພົນ, ໜ່ວຍກູ້ໄພ, ທີມແພດສຸກເສີນ ເພື່ອແກ້ໄຂ ເຫດສຸກເສີນ ຫຼື ອຸບປະຕິເຫດ ທັນທີ ແລະ ເຄື່ອນຍ້າຍປະຊາຊົນ ແລະ ຊັບສິນອອກຈາກພື້ນທີ່ອັນຕະລາຍ.

ຕຳຫຼວດຈະລາຈອນ, ຕຳຫຼວດທາງຫຼວງ, ເຈົ້າໜ້າທີ່ລົດໄຟ ເປັນເຈົ້າການໃນການແກ້ໄຂອຸບປະຕິເຫດຈາກການຂົນສົ່ງສິນຄ້າອັນຕະລາຍ ໂດຍມີການເຂົ້າຮ່ວມຂອງອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 39 ການກຳຈັດສິ່ງເສດເຫຼືອຈາກເຫດສຸກເສີນ ຫຼື ອຸບປະຕິເຫດຂົນສົ່ງສິນຄ້າອັນຕະລາຍ**

ຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຕ້ອງຮັບຜິດຊອບໃນການກຳຈັດສິ່ງເສດເຫຼືອ ຫຼື ເຄມີອັນຕະລາຍ ທີ່ເກີດຈາກ ເຫດສຸກເສີນ ຫຼື ອຸບປະຕິເຫດ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 40 ການໃຊ້ແທນຄ່າເສຍຫາຍ, ການຟື້ນຟູ ພື້ນທີ່ ແລະ ສະພາບແວດລ້ອມ ພາຍຫຼັງເກີດ ເຫດສຸກເສີນ ຫຼື ອຸບປະຕິເຫດ**

ຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍ ຕ້ອງໃຊ້ແທນຄ່າເສຍຫາຍທີ່ເກີດຈາກ ເຫດສຸກເສີນ ຫຼື ອຸບປະຕິເຫດຕາມຄວາມຮັບຜິດຊອບຂອງຕົນ ພ້ອມທັງ ຟື້ນຟູ ພື້ນທີ່ເກີດເຫດ ແລະ ສະພາບແວດລ້ອມ ໃຫ້ກັບຄືນສູ່ສະພາບປົກກະຕິ.

ການໃຊ້ແທນຄ່າເສຍຫາຍ ແລະ ການຟື້ນຟູ ພາຍຫຼັງເກີດອຸບປະຕິເຫດ ແລະ ເຫດການສຸກເສີນ ໃຫ້ປະຕິບັດ ດັ່ງນີ້:

1. ປະເມີນຄວາມຕ້ອງການ;
2. ສ້າງແຜນການໃຊ້ແທນຄ່າເສຍຫາຍ ແລະ ການຟື້ນຟູ;
3. ດຳເນີນການໃຊ້ແທນຄ່າເສຍຫາຍ ແລະ ຟື້ນຟູ;
4. ຕິດຕາມກວດກາ ການໃຊ້ແທນ ແລະ ຟື້ນຟູ.

## ໝວດທີ 6
## ຜູ້ຂັບຂີ່, ທີ່ປຶກສາດ້ານຄວາມປອດໄພ ແລະ ບຸກຄົນທີ່ກ່ຽວຂ້ອງກັບການຂົນສົ່ງ ສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ

**ມາດຕາ 41 ຜູ້ຂັບຂີ່ລົດຂົນສົ່ງສິນຄ້າອັນຕະລາຍທາງບົກ**

ຜູ້ຂັບຂີ່ລົດຂົນສົ່ງສິນຄ້າອັນຕະລາຍທາງບົກ ແມ່ນ ບຸກຄົນ ທີ່ມີໃບຂັບຂີ່ຍານພາຫະນະຕາມປະເພດລົດຂົນສົ່ງທີ່ອະນຸຍາດ ແລະ ຍັງຕ້ອງຜ່ານ ການ ຝຶກອົບຮົມຕາມຫຼັກສູດ ແລະ ສອບເສັງຕາມລະບຽບການກ່ຽວກັບການຂັບຂີ່ຍານພາຫະນະຂົນສົ່ງສິນຄ້າອັນຕະລາຍ ໂດຍມີການ ຢັ້ງຢືນ ແລະ ອະນຸຍາດ ຈາກກະຊວງໂຍທາທິການ ແລະ ຂົນສົ່ງ.

ເງື່ອນໄຂຜູ້ຂັບຂີ່ຍານພາຫະນະຂົນສົ່ງສິນຄ້າອັນຕະລາຍທາງບົກ ມີ ດັ່ງນີ້:

1. ເປັນພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ທີ່ໄດ້ຮັບອະນຸຍາດເຮັດວຽກຢູ່ ສປປ ລາວ;
2. ມີສຸຂະພາບແຂງແຮງ ແລະ ໃບຢັ້ງຢືນສຸຂະພາບ;
3. ມີໃບຂັບຂີ່ຍານພາຫະນະຕາມປະເພດລົດຂົນສົ່ງທີ່ອະນຸຍາດ;
4. ໃບຢັ້ງຢືນການຝຶກອົບຮົມຂອງຜູ້ຂັບຂີ່ຍານພາຫະນະຂົນສົ່ງສິນຄ້າອັນຕະລາຍ;
5. ໃບອະນຸຍາດຂັບຂີ່ຍານພາຫະນະຂົນສົ່ງສິນຄ້າອັນຕະລາຍ;
6. ມີປະສົບການຂັບຂີ່ຍານພາຫະນະຕາມປະເພດໃບຂັບຂີ່;

7. ຈັນຍາບັນວິຊາຊີບໃນການຂັບຂີ່ລົດຂົນສົ່ງສິນຄ້າອັນຕະລາຍ.

ສໍາລັບເງື່ອນໄຂຜູ້ຂັບຂີ່ຍານພາຫະນະຂົນສົ່ງສິນຄ້າອັນຕະລາຍທາງບົກ ລະຫວ່າງປະເທດ ແລະ ຜ່ານແດນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ແລະ ຂໍ້ຕົກລົງສາກົນ ວ່າດ້ວຍການຂົນສົ່ງສິນຄ້າອັນຕະລາຍທາງບົກ ຂອງອົງການສະຫະປະຊາຊາດ.

**ມາດຕາ 42 ພະນັກງານຂັບລົດໄຟຂົນສົ່ງສິນຄ້າອັນຕະລາຍ**

ພະນັກງານຂັບລົດໄຟຂົນສົ່ງສິນຄ້າອັນຕະລາຍ ແມ່ນ ບຸກຄົນ ທີ່ມີໃບອະນຸຍາດຂັບລົດໄຟ ຕາມປະເພດລົດໄຟ ທີ່ອະນຸຍາດ ແລະ ຍັງຕ້ອງຜ່ານ ການ ຝຶກອົບຮົມຕາມຫຼັກສູດ ແລະ ສອບເສັງຕາມລະບຽບການກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍທາງລົດໄຟ ໂດຍມີການຢັ້ງຢືນ ຈາກກະຊວງໂຍທາທິການ ແລະ ຂົນສົ່ງ.

ເງື່ອນໄຂພະນັກງານຂັບລົດໄຟຂົນສົ່ງສິນຄ້າອັນຕະລາຍ ມີ ດັ່ງນີ້:

1. ເປັນພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ຫຼື ຄົນບໍ່ມີສັນຊາດ ທີ່ໄດ້ຮັບອະນຸຍາດເຮັດວຽກຢູ່ ສປປ ລາວ;
2. ມີສຸຂະພາບແຂງແຮງ ແລະ ໃບຢັ້ງຢືນສຸຂະພາບ;
3. ມີໃບອະນຸຍາດຂັບລົດໄຟຕາມແຕ່ລະປະເພດລົດໄຟ;
4. ໃບຢັ້ງຢືນການຝຶກອົບຮົມຂອງພະນັກງານຂັບລົດໄຟຂົນສົ່ງສິນຄ້າອັນຕະລາຍ;
5. ຈັນຍາບັນວິຊາຊີບໃນການຂັບລົດໄຟຂົນສົ່ງສິນຄ້າອັນຕະລາຍ.

ສໍາລັບເງື່ອນໄຂຂອງພະນັກງານຂັບລົດໄຟຂົນສົ່ງສິນຄ້າອັນຕະລາຍ ລະຫວ່າງປະເທດ ແລະ ຜ່ານແດນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ແລະ ລະບຽບການສາກົນ ວ່າດ້ວຍການຂົນສົ່ງສິນຄ້າອັນຕະລາຍທາງລົດໄຟ ຂອງອົງການສະຫະປະຊາຊາດ.

**ມາດຕາ 43 ທີ່ປຶກສາດ້ານຄວາມປອດໄພກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ**

ທີ່ປຶກສາດ້ານຄວາມປອດໄພກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ແມ່ນ ບຸກຄົນທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບການ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍສາກົນ ທາງບົກ ແລະ ທາງລົດໄຟ ແລະ ໄດ້ຜ່ານການຝຶກອົບຮົມ ຕາມຫຼັກສູດກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ, ສອບເສັງຕາມລະບຽບການທີ່ສອດຄ່ອງກັບລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ໂດຍໄດ້ຮັບການຢັ້ງຢືນຈາກກະຊວງໂຍທາທິການ ແລະ ຂົນສົ່ງ.

1. ບຸກຄົນ ທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບການ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍຢ່າງໜ້ອຍ ສາມ ປີ;
2. ມີວຸດທິການສຶກສາ ຈົບລະດັບປະລິນຍາຕີ ຂຶ້ນໄປ ແລະ ມີໃບຢັ້ງຢືນວິຊາຊີບດ້ານການຂົນສົ່ງສິນຄ້າອັນຕະລາຍ ທີ່ໄດ້ຢັ້ງຢືນຈາກກະຊວງໂຍທາທິການ ແລະ ຂົນສົ່ງ;
3. ເປັນທີ່ປຶກສາດ້ານຄວາມປອດໄພກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟຈາກບໍລິສັດອື່ນ ໂດຍໄດ້ຮັບການຢັ້ງຢືນ ຈາກກະຊວງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 44 ຜູ້ຈັດສົ່ງສິນຄ້າອັນຕະລາຍ**

ຜູ້ຈັດສົ່ງສິນຄ້າອັນຕະລາຍ ແມ່ນ ນິຕິບຸກຄົນ ທີ່ບໍລິການ ເຕົ້າໂຮມ, ບັນຈຸ, ຫຸ້ມຫໍ່ສິນຄ້າ ແລະ ປະກອບເອກະສານ ເພື່ອມອບໃຫ້ຜູ້ດໍາເນີນການຂົນສົ່ງສິນຄ້າອັນຕະລາຍ.

**ມາດຕາ 45 ຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍ**

ຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍ ແມ່ນ ນິຕິບຸກຄົນ ທີ່ເປັນເຈົ້າການ ຫຼື ຮັບຜິດຊອບແທນ ຜູ້ສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ໃນການດຳເນີນການຂົນສົ່ງ.

**ມາດຕາ 46 ບຸກຄົນທີ່ກ່ຽວຂ້ອງກັບການຂົນສົ່ງສິນຄ້າອັນຕະລາຍ**

ບຸກຄົນທີ່ກ່ຽວຂ້ອງກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ມີດັ່ງນີ້:

1. ຜູ້ຫຸ້ມຫໍ່ສິນຄ້າອັນຕະລາຍ;
2. ຜູ້ບັນຈຸສິນຄ້າອັນຕະລາຍໃສ່ຖັງ;
3. ຜູ້ຍົກຍໍສິນຄ້າອັນຕະລາຍຂຶ້ນຍານພາຫະນະ ແລະ ພາຫະນະຂົນສົ່ງ;
4. ຜູ້ຄ່ຽນຖ່າຍສິນຄ້າອັນຕະລາຍອອກຈາກຍານພາຫະນະທາງລົດໄຟ;
5. ຜູ້ໃຊ້ຖັງ, ຕູ້ສິນຄ້າ ແລະ ອຸປະກອນ ທີ່ເຄື່ອນຍ້າຍໄດ້;
6. ຜູ້ໃຊ້ຖັງ, ພາຊະນະບັນຈຸ ທີ່ຍຶດຕິດກັບທາງລາກລົດໄຟ;
7. ພະນັກງານປະຕິບັດການ ຢູ່ສະຖານນີລົດໄຟ;
8. ຜູ້ຮັບສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ.

**ມາດຕາ 47 ການຝຶກອົບຮົມ ຜູ້ຂັບຂີ່, ພະນັກງານປະຈຳຍານພາຫະນະ ແລະ ບຸກຄົນທີ່ກ່ຽວຂ້ອງກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ**

ຜູ້ຂັບຂີ່, ພະນັກງານປະຈຳຍານພາຫະນະ ແລະ ບຸກຄົນ ທີ່ກ່ຽວຂ້ອງກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຕ້ອງຜ່ານການຝຶກອົບຮົມຕາມຫຼັກສູດ ແລະ ແຜນການຝຶກອົບຮົມ ທີ່ ກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ.

ກະຊວງໂຍທາທິການ ແລະ ຂົນສົ່ງ ອອກໃບຢັ້ງຢືນການຝຶກອົບຮົມກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ໃຫ້ຜູ້ທີ່ສຳເລັດການຝຶກອົບຮົມຕາມຫຼັກສູດ ແລະ ໄດ້ສອບເສັງຜ່ານ.

ສຳລັບ ຜູ້ຂັບຂີ່ຍານພາຫະນະຂົນສົ່ງສິນຄ້າອັນຕະລາຍທາງບົກ ທີ່ໄດ້ຮັບໃບຢັ້ງຢືນການຝຶກອົບຮົມແລ້ວ ຕ້ອງມີການຝຶກອົບຮົມຄືນໃໝ່ ໃນທຸກ ສາມ ປີ.

**ມາດຕາ 48 ການຝຶກອົບຮົມທີ່ປຶກສາດ້ານຄວາມປອດໄພກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ**

ທີ່ປຶກສາດ້ານຄວາມປອດໄພກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຕ້ອງໄດ້ຮັບການຝຶກອົບຮົມຈາກສູນຝຶກ ຫຼື ວິທະຍາໄລ ທີ່ໄດ້ຮັບການຮັບຮອງຈາກອົງການສະຫະປະຊາຊາດ ແລະ ໄດ້ຜ່ານການສອບເສັງ ຕາມລະບຽບການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ.

## ໝວດທີ 7
## ທຸລະກິດກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ

**ມາດຕາ 49 ປະເພດທຸລະກິດກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ**

ທຸລະກິດກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ມີ ດັ່ງນີ້:

1. ການຈັດສົ່ງສິນຄ້າອັນຕະລາຍ;
2. ການດຳເນີນການຂົນສົ່ງສິນຄ້າອັນຕະລາຍ.

**ມາດຕາ 50 ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ**

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຕ້ອງ ແຈ້ງຂຶ້ນທະບຽນວິສາຫະກິດນຳ ກະຊວງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດຂົນສົ່ງສິນຄ້າອັນຕະລາຍ ນຳກະຊວງໂຍທາທິການ ແລະ ຂົນສົ່ງ ຕາມຄຳຮ້ອງ ແລະ ເອກະສານປະກອບ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ.

**ມາດຕາ 51 ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດຈັດສົ່ງ ແລະ ຂົນສົ່ງ ສິນຄ້າອັນຕະລາຍ**

ການຂໍອະນຸຍາດ ດຳເນີນທຸລະກິດຈັດສົ່ງ ແລະ ຂົນສົ່ງ ສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ໃບທະບຽນວິສາຫະກິດ;
2. ບຸກຄະລາກອນທີ່ມີຄວາມຮູ້ ຄວາມສາມາດ ແລະ ປະສົບການ ທີ່ເໝາະສົມກັບປະເພດທຸລະກິດຂອງຕົນ;
3. ສຳນັກງານ ຫຼື ສິ່ງປຸກສ້າງ, ວັດຖຸປະກອນ ແລະ ພາຫະນະຮັບໃຊ້ທີ່ເໝາະສົມກັບປະເພດທຸລະກິດຂອງຕົນ;
4. ແຜນດຳເນີນທຸລະກິດ ກ່ຽວກັບການຈັດສົ່ງ ແລະ ຂົນສົ່ງສິນຄ້າອັນຕະລາຍ;
5. ປະກັນໄພອຸບປະຕິເຫດພາຍໃນ ຫຼື ສາກົນ;
6. ຖານະການເງິນທີ່ ພຽງພໍ ແລະ ເໝາະສົມກັບແຕ່ລະປະເພດທຸລະກິດ;
7. ຈັນຍາບັນວິຊາຊີບການຂົນສົ່ງສິນຄ້າອັນຕະລາຍທາງບົກ.

ສຳລັບຜູ້ດຳເນີນທຸລະກິດການຂົນສົ່ງ ຍັງຕ້ອງມີຍານພາຫະນະຂົນສົ່ງ ທີ່ເໝາະສົມກັບປະເພດສິນຄ້າອັນຕະລາຍທີ່ຂົນສົ່ງ.

**ມາດຕາ 52 ການພິຈາລະນາອະນຸຍາດດຳເນີນທຸລະກິດ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ**

ກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

ໃນກໍລະນີບໍ່ອະນຸຍາດໃຫ້ດຳເນີນທຸລະກິດນັ້ນ ກໍໃຫ້ແຈ້ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນໃຫ້ຜູ້ຮ້ອງຂໍ ພາຍໃນກຳນົດເວລາດັ່ງກ່າວ.

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ມີອາຍຸການ ໜຶ່ງປີ ແລະ ສາມາດຕໍ່ໄດ້ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 53 ການໂຈະການດຳເນີນທຸລະກິດກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ**

ການດຳເນີນທຸລະກິດກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຈະຖືກໂຈະໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ດຳເນີນທຸລະກິດ;
2. ບໍ່ລາຍງານ ກ່ຽວກັບການດຳເນີນທຸລະກິດວິສາຫະກິດຂອງຕົນ ຕໍ່ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເວລາ ສອງປີ ຕິດຕໍ່ກັນ;
3. ບໍ່ມີໃບຢັ້ງຢືນການມອບພັນທະສ່ວຍສາອາກອນປະຈຳປີ ເປັນເວລາ ສອງປີ ຕິດຕໍ່ກັນ;
4. ບໍ່ມີໃບຕິດຕາມການຖືບັນຊີ ເປັນເວລາ ສອງປີ ຕິດຕໍ່ກັນ.

ໃນກໍລະນີຜູ້ດໍາເນີນທຸລະກິດກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ຫາກບໍ່ ປັບປຸງ ຫຼື ແກ້ໄຂ ຕາມການແຈ້ງເຕືອນແລ້ວ ກະຊວງໂຍທາທິການ ແລະ ຂົນສົ່ງ ສັ່ງໂຈະ ການດໍາເນີນທຸລະກິດ.

**ມາດຕາ 54 ການຖອນໃບອະນຸຍາດດໍາເນີນທຸລະກິດຂົນສົ່ງສິນຄ້າອັນຕະລາຍ**

ໃບອະນຸຍາດດໍາເນີນທຸລະກິດຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຈະຖືກຖອນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີ ຂອງຜູ້ດໍາເນີນທຸລະກິດ;
2. ບໍ່ ປັບປຸງ ຫຼື ແກ້ໄຂ ຕາມການສັ່ງໂຈະ;
3. ຂາຍ, ມອບ, ໂອນ ຫຼື ເອົາໃບອະນຸຍາດດໍາເນີນທຸລະກິດຂົນສົ່ງສິນຄ້າອັນຕະລາຍ ໃຫ້ຜູ້ອື່ນນໍາໃຊ້;
4. ດໍາເນີນທຸລະກິດບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍຂອງການດໍາເນີນທຸລະກິດ;
5. ສືບຕໍ່ດໍາເນີນທຸລະກິດຂົນສົ່ງສິນຄ້າອັນຕະລາຍ ໃນໄລຍະເວລາຖືກສັ່ງໂຈະ;
6. ເຄື່ອນໄຫວດໍາເນີນທຸລະກິດຂົນສົ່ງສິນຄ້າອັນຕະລາຍ ບໍ່ຖືກຕ້ອງຕາມ ກົດໝາຍ ຊຶ່ງກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ.

ພາຍຫຼັງ ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ຖອນໃບອະນຸຍາດດໍາເນີນທຸລະກິດແລ້ວ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກໍາ ແລະ ການຄ້າ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ ພາຍໃນເວລາ ຫ້າ ວັນລັດຖະການ ນັບແຕ່ວັນຖອນໃບອະນຸຍາດດໍາເນີນທຸລະກິດ ເປັນຕົ້ນໄປ.

## ໝວດທີ 8
## ສິດ ແລະ ພັນທະ ຂອງ ຜູ້ຂັບຂີ່, ພະນັກງານປະຈໍາຍານພາຫະນະ, ພະນັກງານຂັບລົດໄຟ, ພະນັກງານປະຈໍາຫົວຈັກລົດໄຟ, ທີ່ປຶກສາດ້ານຄວາມປອດໄພ ແລະ ບຸກຄົນ ທີ່ກ່ຽວຂ້ອງກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ

**ມາດຕາ 55 ສິດ ແລະ ພັນທະ ຂອງຜູ້ຂັບຂີ່, ພະນັກງານປະຈໍາຍານພາຫະນະ, ພະນັກງານຂັບລົດໄຟ ແລະ ພະນັກງານປະຈໍາຫົວຈັກລົດໄຟ**

ຜູ້ຂັບຂີ່, ພະນັກງານປະຈໍາຍານພາຫະນະ, ພະນັກງານຂັບລົດໄຟ ແລະ ພະນັກງານປະຈໍາຫົວຈັກລົດໄຟ ທີ່ຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ ມີສິດ ແລະ ພັນທະ ດັ່ງນີ້:

1. ກວດກາພາຊະນະບັນຈຸສິນຄ້າອັນຕະລາຍ ແລະ ປະຕິເສດຂົນສົ່ງສິນຄ້າອັນຕະລາຍ ຖ້າຫາກພາຊະນະບັນຈຸເປ່ເພ, ເສຍຫາຍ;
2. ກວດກາການຈັດວາງສິນຄ້າອັນຕະລາຍ ໃຫ້ມີຄວາມຖືກຕ້ອງ;
3. ກວດກາ ຍານພາຫະນະ, ພາຫະນະ, ອຸປະກອນປະຈໍາຍານພາຫະນະ ແລະ ສໍາລັບບຸກຄົນ ໃຫ້ຄົບຖ້ວນ;
4. ກວດກາເອກະສານຂົນສົ່ງສິນຄ້າອັນຕະລາຍທີ່ກ່ຽວຂ້ອງທັງໝົດ ໃຫ້ຄົບຖ້ວນ;
5. ກວດກາການຢຶດຕິດ ພາຊະນະບັນຈຸສິນຄ້າອັນຕະລາຍ ກັບຍານພາຫະນະ ແລະ ພາຫະນະ ໃຫ້ຖືກຕ້ອງ ແລະ ເໝາະສົມ;
6. ກວດກາການຕິດ ປ້າຍ ແລະ ເຄື່ອງໝາຍໃສ່ຍານພາຫະນະ ແລະ ພາຫະນະ ຂົນສົ່ງສິນຄ້າອັນຕະລາຍ;
7. ດໍາເນີນການຂົນສົ່ງສິນຄ້າອັນຕະລາຍ ຕາມສາຍທາງທີ່ໄດ້ກໍານົດໄວ້ ຢ່າງເຂັ້ມງວດ ຍົກເວັ້ນພະນັກງານຂັບລົດໄຟ ແລະ ພະນັກງານປະຈໍາຫົວຈັກລົດໄຟ;

8. ໃສ່ໜ້າກາກສຸກເສີນ ແລະ ຊຸດພິອີ ໃນເວລາເກີດເຫດສຸກເສີນ ຫຼື ອຸບປະຕິເຫດ ຈາກການຂົນສົ່ງທາດອາຍແກັສ ແລະ ທາດພິດ;

9. ປະຕິບັດຂັ້ນຕອນຕາມແຜນຮັບມືອຸບປະຕິເຫດ;

10. ນຳໃຊ້ສິດ ແລະ ປະຕິບັດພັນທະ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 56 ສິດ ແລະ ພັນທະ ຂອງທີ່ປຶກສາດ້ານຄວາມປອດໄພກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ**

ທີ່ປຶກສາດ້ານຄວາມປອດໄພກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ມີ ສິດ ແລະ ພັນທະ ດັ່ງນີ້:

1. ໃຫ້ຄຳປຶກສາດ້ານການຂົນສົ່ງສິນຄ້າອັນຕະລາຍ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ;

2. ເປັນວິທະຍາກອນຝຶກອົບຮົມ ຜູ້ຂັບຂີ່, ພະນັກງານປະຈຳຍານພາຫະນະ, ພະນັກງານຂັບລົດໄຟ ແລະ ພະນັກງານປະຈຳຫົວຈັກລົດໄຟ ແລະ ບຸກຄົນທີ່ກ່ຽວຂ້ອງກັບການຂົນສົ່ງສິນຄ້າອັນຕະລາຍ;

3. ແນະນຳການກະກຽມການຂົນສົ່ງ ເປັນຕົ້ນ ການເລືອກພາຊະນະບັນຈຸ, ການບັນຈຸ ແລະ ການຫຸ້ມຫໍ່, ການຕິດສະຫຼາກ ແລະ ເຄື່ອງໝາຍ ໃສ່ພາຊະນະບັນຈຸ, ຫີບຫໍ່ສິນຄ້າອັນຕະລາຍ, ການເລືອກໃຊ້ຍານພາຫະນະ ແລະ ພາຫະນະຂົນສົ່ງສິນຄ້າອັນຕະລາຍ, ການຕິດປ້າຍ ແລະ ເຄື່ອງໝາຍ ໃສ່ຍານພາຫະນະ ແລະ ພາຫະນະ;

4. ຊ່ວຍເຫຼືອ ແລະ ແນະນຳ ວິສາຫະກິດທີ່ດຳເນີນຂົນສົ່ງສິນຄ້າອັນຕະລາຍ ກ່ຽວກັບການປ້ອງກັນຄວາມສ່ຽງ, ແຜນຮັບມືອຸບປະຕິເຫດ ທີ່ອາດຈະເກີດຂຶ້ນຈາກການຂົນສົ່ງສິນຄ້າອັນຕະລາຍ;

5. ແນະນຳ ການປະກອບເອກະສານປະຈຳຍານພາຫະນະຂົນສົ່ງສິນຄ້າອັນຕະລາຍ ໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມລະບຽບການສາກົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ;

6. ສະຫຼຸບ ແລະ ລາຍງານ ກ່ຽວກັບການເກີດອຸບປະຕິເຫດຈາກການຂົນສົ່ງສິນຄ້າອັນຕະລາຍ;

7. ນຳໃຊ້ສິດ ແລະ ປະຕິບັດພັນທະ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 57 ສິດ ແລະ ພັນທະ ຂອງຜູ້ຈັດສົ່ງສິນຄ້າອັນຕະລາຍ**

ຜູ້ຈັດສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ມີ ສິດ ແລະ ພັນທະ ດັ່ງນີ້:

1. ໄດ້ຮັບຄ່າບໍລິການຈັດສົ່ງ;

2. ແຈ້ງລັກສະນະຂອງສິນຄ້າ, ຈຳນວນຫີບຫໍ່, ນ້ຳໜັກ, ປະລິມານ ສິນຄ້າອັນຕະລາຍ ໃຫ້ຜູ້ຂົນສົ່ງ ແລະ ຜູ້ຂັບຂີ່ຍານພາຫະນະຂົນສົ່ງສິນຄ້າອັນຕະລາຍ;

3. ຈຳແນກປະເພດສິນຄ້າອັນຕະລາຍໃຫ້ຖືກຕ້ອງ;

4. ຄັດເລືອກ ພາຊະນະບັນຈຸ, ຫຸ້ມຫໍ່ ສິນຄ້າອັນຕະລາຍ ໃຫ້ຖືກຕ້ອງ ແລະ ເໝາະສົມກັບປະເພດສິນຄ້າອັນຕະລາຍ;

5. ຕິດ ສະຫຼາກ, ເຄື່ອງໝາຍ ແລະ ປ້າຍ ໃຫ້ຖືກຕ້ອງ;

6. ກະກຽມເອກະສານການຂົນສົ່ງໃຫ້ ຖືກຕ້ອງ ແລະ ຄົບຖ້ວນ;

7. ສະໜອງຂໍ້ມູນໃຫ້ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການຈັດສົ່ງສິນຄ້າອັນຕະລາຍ ທີ່ຕົນຮັບຜິດຊອບ;

8. ເລືອກຜູ້ຂັບຂີ່ຍານພາຫະນະຂົນສົ່ງສິນຄ້າອັນຕະລາຍ;

9. ຕິດຕາມການຂົນສົ່ງສິນຄ້າອັນຕະລາຍ ທີ່ຕົນຈັດສົ່ງ;

10. ທວງເອົາຄ່າເສຍຫາຍ ຕາມ ສັນຍາ, ກົດໝາຍ ແລະ ລະບຽບການ;

11. ນຳໃຊ້ສິດ ແລະ ປະຕິບັດພັນທະ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 58 ສິດ ແລະ ພັນທະ ຂອງຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍ**

ຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ມີ ສິດ ແລະ ພັນທະ ດັ່ງນີ້:

1. ໄດ້ຮັບຄ່າບໍລິການຂົນສົ່ງສິນຄ້າ;
2. ທວງເອົາຄ່າບໍລິການຂົນສົ່ງສິນຄ້າອັນຕະລາຍ ທີ່ຕົນຂົນສົ່ງ;
3. ປະຕິເສດການຂົນສົ່ງສິນຄ້າອັນຕະລາຍ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
4. ຂົນສົ່ງສິນຄ້າອັນຕະລາຍ ໄປເຖິງຈຸດໝາຍປາຍທາງຕາມກຳນົດເວລາ;
5. ປົກປັກຮັກສາສິນຄ້າອັນຕະລາຍ ໃຫ້ຢູ່ໃນສະພາບເດີມ ແລະ ບໍ່ໃຫ້ຕົກເຮ່ຍເສຍຫາຍ;
6. ໃຊ້ແທນຄ່າເສຍຫາຍ ຕາມກົດໝາຍ ແລະ ລະບຽບການ ກໍລະນີ ສິນຄ້າອັນຕະລາຍ ທີ່ຕົນຂົນສົ່ງ ເປ່ເພ, ເສຍຫາຍ ຫຼື ສູນຫາຍ;
7. ແຈ້ງໃຫ້ຜູ້ສົ່ງ ຫຼື ຜູ້ຈັດສົ່ງສິນຄ້າອັນຕະລາຍ ຢ່າງຮີບດ່ວນ ກໍລະນີຜູ້ຮັບສິນຄ້າ ບໍ່ຮັບເອົາສິນຄ້າອັນຕະລາຍ ຫຼື ປະຕິເສດສິນຄ້າອັນຕະລາຍ ເພື່ອຊອກຫາວິທີແກ້ໄຂຮ່ວມກັນ;
8. ຂົນສົ່ງສິນຄ້າອັນຕະລາຍ ໃຫ້ຖືກຕ້ອງຕາມລາຍການ ທີ່ໄດ້ຮັບອະນຸຍາດ;
9. ນຳໃຊ້ຍານພາຫະນະ, ພາຫະນະ ແລະ ອຸປະກອນ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກ;
10. ບັນຈຸ, ຈັດວາງ ແລະ ຂັດແຍກ ໃຫ້ຖືກຕ້ອງ ຕາມປະເພດສິນຄ້າອັນຕະລາຍ ແລະ ນ້ຳໜັກການບັນທຸກ ທີ່ໄດ້ຮັບອະນຸຍາດ;
11. ດຳເນີນການຂົນສົ່ງ ຕາມສາຍທາງ, ເວລາ, ໄລຍະເວລາ ການຂົນສົ່ງ ທີ່ກຳນົດໃຫ້;
12. ກຳຈັດສິ່ງເສດເຫຼືອ ທີ່ເກີດຈາກ ການຮົ່ວໄຫຼ ຫຼື ພາຊະນະທີ່ບັນຈຸສິນຄ້າອັນຕະລາຍ;
13. ຮັບຜິດຊອບຄ່າເສຍຫາຍ ທີ່ເກີດຂຶ້ນຕໍ່ ສຸຂະພາບ, ຊີວິດ, ຊັບສິນ ແລະ ສິ່ງແວດລ້ອມ ກໍລະນີເກີດເຫດສຸກເສີນ ຫຼື ອຸບປະຕິເຫດຈາກການຂົນສົ່ງສິນຄ້າອັນຕະລາຍ;
14. ນຳໃຊ້ສິດ ແລະ ປະຕິບັດພັນທະ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 59 ສິດ ແລະ ພັນທະ ຂອງບຸກຄົນທີ່ກ່ຽວຂ້ອງກັບການຂົນສົ່ງສິນຄ້າອັນຕະລາຍ**

ສິດ ແລະ ພັນທະ ຂອງບຸກຄົນທີ່ກ່ຽວຂ້ອງກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ, ລະບຽບການ ຂອງ ສປປ ລາວ ແລະ ລະບຽບການສາກົນ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ.

## ໝວດທີ 9
## ຂໍ້ຫ້າມ

**ມາດຕາ 60 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ໂດຍບໍ່ໄດ້ຮັບອະນຸຍາດ;
2. ສ້າງອຸປະສັກ, ຂັດຂວາງ, ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ໝິ່ນປະໝາດການເຄື່ອນໄຫວຂອງຜູ້ດຳເນີນທຸລະກິດ ລວມທັງການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ເປັນສື່ກາງ ໃນການໃຫ້ ຫຼື ຮັບສິນບົນ ແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
4. ເຜີຍແຜ່ຂໍ້ມູນທີ່ບໍ່ມີມູນຄວາມຈິງກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;
5. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 61 ຂໍ້ຫ້າມສຳລັບຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍ**

ຫ້າມ ຜູ້ດຳເນີນການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ມີ ພຶດຕິກຳ ດັ່ງນີ້:

1. ໃຫ້ຜູ້ອື່ນ ເຊົ່າ, ນຳໃຊ້ໃບອະນຸຍາດດຳເນີນທຸລະກິດຂົນສົ່ງສິນຄ້າອັນຕະລາຍ ຂອງຕົນ ຫຼື ນຳໃຊ້ໃບອະນຸຍາດດຳເນີນທຸລະກິດຂົນສົ່ງສິນຄ້າອັນຕະລາຍ ຂອງຜູ້ອື່ນ;

2. ນຳໃຊ້ຍານພາຫະນະ, ພາຫະນະ ແລະ ພາຊະນະບັນຈຸທີ່ບໍ່ໄດ້ມາດຕະຖານເຕັກນິກ;

3. ຂົນສົ່ງສິນຄ້າອັນຕະລາຍ ໂດຍບໍ່ຖືກຕ້ອງຕາມປະເພດທີ່ໄດ້ຮັບການອະນຸຍາດ, ບໍ່ມີໃບອະນຸຍາດ ຫຼື ນຳໃຊ້ໃບອະນຸຍາດໝົດອາຍຸ;

4. ປົດບັງ, ປອມແປງ ຫຼື ບິດເບືອນ ຂໍ້ມູນ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ;

5. ຂັດຂວາງການກວດສອບ ແລະ ກວດກາການຂົນສົ່ງສິນຄ້າອັນຕະລາຍ;

6. ແກ່ຍາວເວລາໃນການສົ່ງມອບສິນຄ້າອັນຕະລາຍໃຫ້ແກ່ຜູ້ຮັບ;

7. ສົ່ງມອບສິນຄ້າອັນຕະລາຍໃຫ້ແກ່ບຸກຄົນທີ່ບໍ່ມີສິດຮັບ;

8. ໃຫ້ ແລະ ຮັບສິນບົນກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ;

9. ສັບປ່ຽນ, ຊຸກເຊື່ອງ ແລະ ເຊື່ອງອຳ ສິນຄ້າອັນຕະລາຍ ທີ່ເກືອດຫ້າມ;

10. ບໍ່ໃຫ້ການຮ່ວມມື, ປົດບັງ, ປອມແປງ, ບິດເບືອນຂໍ້ມູນກ່ຽວກັບບັນຊີການເງິນທຸລະກິດ ແລະ ບໍລິມາດຂົນສົ່ງຕໍ່ການກວດກາຂອງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ;

11. ປະກອບເອກະສານທີ່ບໍ່ເປັນຄວາມຈິງ, ສົມຮູ້ຮ່ວມຄິດ ຫຼື ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານຂອງລັດ ເພື່ອໃຫ້ໄດ້ຮັບອະນຸຍາດໃນການດຳເນີນການຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ;

12. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 62 ຂໍ້ຫ້າມສຳລັບ ຜູ້ຂັບຂີ່, ພະນັກງານປະຈຳຍານພາຫະນະ, ພະນັກງານຂັບລົດໄຟ ແລະ ພະນັກງານປະຈຳຫົວຈັກລົດໄຟ ທີ່ຂົນສົ່ງສິນຄ້າອັນຕະລາຍ**

ຫ້າມ ຜູ້ຂັບຂີ່, ພະນັກງານປະຈຳຍານພາຫະນະ, ພະນັກງານຂັບລົດໄຟ ແລະ ພະນັກງານປະຈຳຫົວຈັກລົດໄຟ ທີ່ຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ມີພຶດຕິກຳ ດັ່ງນີ້:

1. ຂັບຂີ່ໂດຍບໍ່ມີໃບຂັບຂີ່, ໃບຂັບຂີ່ ຍານພາຫະນະບໍ່ຖືກກັບປະເພດລົດ ຫຼື ໝົດອາຍຸ;

2. ຂັບຂີ່ຍານພາຫະນະໂດຍບໍ່ມີໃບຢັ້ງຢືນການຝຶກອົບຮົມຕາມຫຼັກສູດ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ;

3. ຂົນສົ່ງສິນຄ້າອັນຕະລາຍ ອອກນອກສາຍທາງ ແລະ ເວລາ ທີ່ກຳນົດໄວ້;

4. ຂັບຂີ່ຍານພາຫະນະທີ່ຂົນສົ່ງສິນຄ້າອັນຕະລາຍທາງບົກ ໄວເກີນກຳນົດ ແລະ ປະໝາດ;

5. ເສບຢາເສບຕິດ, ດື່ມສິ່ງມຶນເມົາ ໃນເວລາຂັບຂີ່;

6. ຈອດລົດ, ຄ່ຽນຖ່າຍສິນຄ້າ ຢູ່ບ່ອນຫ້າມຈອດ ຫຼື ຕາມລຳພັງ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 63 ຂໍ້ຫ້າມສຳລັບຜູ້ຈັດສົ່ງສິນຄ້າອັນຕະລາຍ**

ຫ້າມ ຜູ້ຈັດສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ມີພຶດຕິກຳ ດັ່ງນີ້:

1. ແຈ້ງຂໍ້ມູນສິນຄ້າອັນຕະລາຍທີ່ບໍ່ຖືກຕ້ອງຕາມສັນຍາ ແລະ ບໍ່ຖືກຕ້ອງກັບສິນຄ້າອັນຕະລາຍຕົວຈິງ;

2. ປອມແປງ ຫຼື ນຳໃຊ້ເອກະສານປອມ ໃນການຈັດສົ່ງສິນຄ້າອັນຕະລາຍ;

3. ແກ່ຍາວເວລາໃນການສົ່ງມອບສິນຄ້າ ຫຼື ການຈ່າຍຄ່າດຳເນີນການຂົນສົ່ງ;

4. ຈັດສົ່ງສິນຄ້າເກືອດຫ້າມ ຫຼື ຜິດກົດໝາຍ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 64 ຂໍ້ຫ້າມສຳລັບ ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດອຳນາດ, ຕຳແໜ່ງ, ໜ້າທີ່ ເພື່ອຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;

2. ເມີນເສີຍ, ເລີ່ນເລີ້ ຕໍ່ການປະຕິບັດໜ້າທີ່, ບິດເບືອນຂໍ້ມູນ, ກົດໜ່ວງ, ຖ່ວງດຶງ ການພິຈາລະນາ ເອກະສານ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

3. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງຕໍ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

4. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບທາງລັດຖະການ ຫຼື ຂໍ້ມູນຂອງຜູ້ດຳເນີນທຸລະກິດໂດຍບໍ່ໄດ້ຮັບ ອະນຸຍາດ;

5. ຮັບ, ໃຫ້, ເປັນສື່ກາງໃນການໃຫ້ ສິນບົນ;

6. ອອກອະນຸຍາດດຳເນີນທຸລະກິດກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ໂດຍບໍ່ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ໝວດທີ 10
## ການຄຸ້ມຄອງ ແລະ ກວດກາ ວຽກງານຂົນສົ່ງສິນຄ້າອັນຕະລາຍ

**ມາດຕາ 65 ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂົນສົ່ງສິນຄ້າອັນຕະລາຍ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການ ປະສານສົມທົບ ກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານ ຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ປະກອບດ້ວຍ:

1. ກະຊວງໂຍທາທິການ ແລະ ຂົນສົ່ງ;

2. ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ;

3. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ.

**ມາດຕາ 66 ສິດ ແລະ ໜ້າທີ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ກະຊວງໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບ ວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ໃນຂອບເຂດທົ່ວປະເທດ;

4. ຊີ້ນໍາ, ຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນ ຜົນການປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ;

5. ອອກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ;

6. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດໍາເນີນ ທຸລະກິດກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ;

7. ຄົ້ນຄວ້າ, ສ້າງຫຼັກສູດ ຝຶກອົບຮົມກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

8. ຈັດຝຶກອົບຮົມ, ສອບເສັງ ແລະ ອອກໃບຢັ້ງຢືນການຝຶກອົບຮົມ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ;

9. ຈັດການສອບເສັງ ແລະ ອອກໃບຂັບຂີ່ ຍານພາຫະນະຂົນສົ່ງສິນຄ້າອັນຕະລາຍທາງບົກ;

10. ສ້າງ, ບໍາລຸງ, ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

11. ຮັບ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

12. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

13. ພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

14. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

15. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 67 ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

3. ຊີ້ນຳ, ຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ;

4. ສະເໜີ ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ທີ່ຂັດກັບກົດໝາຍ;

5. ສະເໜີ ໂຈະ ຫຼື ຖອນໃບອະນຸຍາດ ດຳເນີນທຸລະກິດ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ;

6. ສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

7. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

8. ປະສານສົມທົບກັບ ພະແນກການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຂອງ ນະຄອນຫຼວງ, ແຂວງ ໃນການຈັດຕັ້ງປະຕິບັດວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຕໍ່ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 68 ສິດ ແລະ ໜ້າທີ່ ຂອງຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະຕິບັດ ນະໂຍບາຍກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

3. ສະເໜີ ສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍທາງບົກ ແລະ ທາງລົດໄຟ;

4. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

5. ປະສານສົມທົບກັບ ຫ້ອງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຂອງ ເມືອງ, ນະຄອນ ໃນການຈັດຕັ້ງປະຕິບັດວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຕໍ່ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ ແລະ ຄະນະກຳມະການປົກຄອງ ເມືອງ, ນະຄອນ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 69 ສິດ ແລະ ໜ້າທີ່ ຂອງ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ປະສານສົມທົບ ແລະ ໃຫ້ການຮ່ວມມືກັບກະຊວງໂຍທາທິການ ແລະ ຂົນສົ່ງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 70 ເນື້ອໃນການກວດກາ**

ການກວດກາວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ດຳລັດສະບັບນີ້, ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍສາກົນ ທາງບົກ ແລະ ທາງລົດໄຟ;

2. ການປະຕິບັດໜ້າທີ່ ຂອງ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວກັບວຽກງານຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

3. ການດຳເນີນທຸລະກິດກ່ຽວກັບການຂົນສົ່ງສິນຄ້າອັນຕະລາຍ ທາງບົກ ແລະ ທາງລົດໄຟ;

4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 71 ຮູບການການກວດກາ**

ການກວດກາວຽກງານຂົນສົ່ງສິນຄ້າອັນຕະລາຍ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຢ່າງເປັນປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປ ຕາມແຜນການ ຢ່າງເປັນປະຈຳ ແລະ ມີການກຳນົດເວລາທີ່ແນ່ນອນ;

2. ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍ ຖືກກວດກາ ຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 11
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 72 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດ ດຳລັດສະບັບນີ້ ຈະໄດ້ຮັບ ການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 73 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກສຶກສາ ອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດ ທາງ ອາຍາຕາມກົດໝາຍ.

## ໝວດທີ 12
## ບົດບັນຍັດສຸດທ້າຍ

**ມາດຕາ 74 ການຈັດຕັ້ງປະຕິບັດ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 75 ຜົນສັກສິດ**

ດຳລັດ ສະບັບນີ້ ມີຜົນສັກສິດ ນັບແຕ່ ວັນທີ 20 ຕຸລາ 2026 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**